ໄກສອນ ພົມວິຫານ

# ເພີ່ມທະວີຄວາມສາມັກຄີ ເປັນເອກະພາບ, ເຮັດສຳເລັດ ໜ້າທີ່ປີ 1990 ຢ່າງມີໄຊ

1990

ເພີ່ມທະວີຄວາມສາມັກຄີ
ເປັນເອກະພາບ, ເຮັດສຳເລັດ
ໜ້າທີ່ປີ 1990 ຢ່າງມີໄຊ



ໄກສອນ ພົມວິຫານ

ສູນທອນພົດ

ຂອງສະຫາຍ ໄກສອນ ພົມວິຫານ

ເລຂາທິການໃຫຍ່ສູນກາງພັກ, ປະທານສະພາລັດຖະມົນຕີ

ແຫ່ງ ສ.ປ.ປ.ລາວ ກ່າວຕໍ່ກອງປະຊຸມສາມັນ ປະຈຳປີ ໑໙໙໐

ຂອງສະພາປະຊາຊົນສູງສຸດ ແຫ່ງ ສ.ປ.ປ.ລາວ

(ວຽງຈັນ, ວັນທີ ໙ ກຸມພາ ໑໙໙໐)

ຄະນະປະທານທີ່ນັບຖື,

ບັນດາທ່ານຜູ້ແທນສະພາປະຊາຊົນສູງສຸດ ທີ່ນັບຖື,

ຕາງໜ້າຄະນະບໍລິຫານງານສູນກາງພັກ ແລະ ສະພາລັດຖະມົນຕີ ຂ້າພະເຈົ້າຂໍສົ່ງພອນປີໃໝ່ອັນປະເສີດມາຍັງບັນດາທ່ານຜູ້ແທນ ແລະໂດຍຜ່ານບັນດາທ່ານຂໍສົ່ງພອນປີໃໝ່ອັນປະເສີດ ແລະ ຄວາມຢ້ຽມຢາມຖາມຂ່າວອັນສະໜິດສະໜົມ ໄປຍັງພີ່ນ້ອງຮ່ວມຊາດ ເຜົ່າຕ່າງໆ, ໄປຍັງພະນັກງານ, ນັກຮົບ, ພາລະກອນທຸກຖ້ວນໜ້າດ້ວຍ.

ພວກເຮົາກ້າວເຂົ້າສູ່ປີ ໑໙໙໐ ດ້ວຍຄວາມເບີກບານ ມ່ວນຊື່ນ, ແຕ່ ພ້ອມກັນນັ້ນ ກໍ່ມີຄວາມຫ່ວງໃຍ ແລະຄວາມ ຮັບຜິດຊອບອັນໃຫຍ່ຫລວງ.

ພວກເຮົາມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ເຫັນວ່າ ໃນປີທີ່ຜ່ານມາ ເຖິງວ່າ ສະພາບການຢູ່ໃນພາກພື້ນ ແລະໃນໂລກມີການຜັນແປໄປຢ່າງສັບສົນທີ່ສຸດ ແລະສະພາບການພາຍໃນປະເທດ ກໍ່ຍັງມີຄວາມຫຍຸ້ງຍາກຫລາຍປະການກໍຕາມ ແຕ່ ສາທາລະນະລັດ ທີ່ໜຸ່ມນ້ອຍຂອງພວກເຮົາກໍ່ຍັງຢືນໝັ້ນ ແລະສືບຕໍ່ກ້າວຂຶ້ນຢ່າງໜັກແໜ້ນ;ແຜນນະໂຍບາຍປ່ຽນແປງໃໝ່ຂອງພັກ ແລະລັດເຮົາ ໄດ້ເລີ່ມເຂົ້າສູ່ ຊີວິດເສດຖະກິດ-ສັງຄົມຂອງປະເທດຊາດ ແລະໄດ້ຮັບການສະໜັບສະໜູນຢ່າງສຸດອົກສຸດໃຈຈາກປະຊາຊົນລາວເຜົ່າຕ່າງໆ ອັນໄດ້ນຳມາເຊິ່ງຜົນສຳເລັດອັນສຳຄັນເບື້ອງຕົ້ນໃນຫລາຍຂົງເຂດ,ລະອຽດຄື:

- ນະໂຍບາຍໃໝ່ ກ່ຽວກັບໂຄງປະກອບເສດຖະກິດ, ກົນໄກຄຸ້ມຄອງເສດຖະກິດຂອງພັກ ແລະລັດ ໄດ້ເລີ່ມເສີມຂະຫຍາຍຄຸນປະໂຫຍດກະຕຸກຊຸກຍູ້ບັນດາພາກສ່ວນເສດຖະກິດ, ຫັນຈາກ ກົນໄກຄຸ້ມຄອງແບບບໍລິຫານເກືອບກຸມລວມສູນອາດຍາສິດ ໄປສູ່ກົນໄກ ໄລ່ລຽງທຸລະກິດ, ເປັນເຈົ້າຕົນເອງ ທາງດ້ານການເງິນ ແລະແຜນການ, ຈໍລະຈອນສິນຄ້າເສລີຖືກກົດໝາຍ,ປະຕິບັດກົນໄກລາຄາດຽວ, ປະກາດໃຊ້ກົດໝາຍການລົງທຶນ... ທັງໝົດເຫລົ່ານີ້ໄດ້ຊຸກຍູ້ການຜະລິດ ແລະການຈໍລະຈອນສິນຄ້າ, ເປີດກວ້າງຕະຫລາດພາຍໃນ ປະເທດ ແລະການພົວພັນເສດຖະກິດກັບຕ່າງປະເທດ. ປັດໄຈໃໝ່ແລະແບບຢ່າງອັນດີເດັ່ນໃນການຜະລິດທຸລະກິດກໍ່ໄດ້ປະກົດຕົວຂຶ້ນຢູ່ຫລາຍ

ທ້ອງຖິ່ນໃນທົ່ວປະເທດ.

ຍ້ອນຄວາມດຸໝັ່ນພາກພຽນຂອງພີ່ນ້ອງ ຊາວກະສິກອນ, ໄປຄຽງຄູ່ກັບການປະຕິບັດກົນໄກໃໝ່, ກົນໄກມອບເໝົາໃນກະສິກຳແລະຍ້ອນດິນຟ້າອາກາດອຳນວຍການຜະລິດເຂົ້າເປືອກໃນປີ ໑໙໘໙ ຈຶ່ງສາມາດບັນລຸໄດ້ ໑ ລ້ານ ໔ ແສນໂຕນ, ສະເລ່ຍໃສ່ຫົວຄົນໃນທົ່ວປະເທດແລ້ວ ຜູ້ໜຶ່ງຈະໄດ້ຮັບ ໓໕໐ ກິໂລ. ການປູກພືດອຸດສາຫະກຳເຊັ່ນ: ສາລີ, ຖົ່ວປະເພດຕ່າງໆ, ໝາກງາ, ຝ້າຍ, ຢາສູບ, ກາເຟ ແລະພືດອື່ນໆ ໄດ້ເລີ່ມເປັນຂະບວນການ, ການລ້ຽງສັດ ກໍ່ໄດ້ຮັບການເອົາໃຈໃສ່ ແລະມີການຂະຫຍາຍຕົວ, ອັນໄດ້ເຮັດ ໃຫ້ການຜະລິດກະສິກຳມີຄວາມອຸດົມຮັ່ງມີຂຶ້ນຕື່ມ ແລະເພີ່ມແຫຼ່ງສິນຄ້າໃຊ້ສອຍ ແລະສິນຄ້າຂາອອກ ທີ່ມີຄຸນຄ່າ.

ຂະແໜງການປ່າໄມ້, ອຸດສາຫະກຳ, ຄົມນາຄົມຂົນສົ່ງ, ໄປສະນີ, ກໍ່ສ້າງ, ການຄ້າພາຍໃນ ແລະຕ່າງປະເທດ... ກໍ່ໄດ້ມີຄວາມບຸກບືນ ແລະມີການຫັນປ່ຽນອັນຕັ້ງໜ້າພໍສົມຄວນ. ດ້ານວັດທະນະທຳ, ສຶກສາ ແລະສາທາລະນະສຸກ ກໍ່ໄດ້ຮັບການເອົາໃຈໃສ່ຈາກພັກ-ລັດ ແລະໄດ້ຮັບການອຸ້ມຊູຊ່ວຍໜູນຈາກປະຊາຊົນ. ເບິ່ງທົ່ວໄປແລ້ວ ຊີວິດການເປັນຢູ່ຂອງປະຊາຊົນທາງດ້ານວັດຖຸ ແລະຈິດໃຈມີຄວາມສະຫງົບປົກກະຕິ ແລະໄດ້ຮັບການປົວແປງເທື່ອລະກ້າວ.

- ສິ່ງທີ່ໜ້າເພິ່ງພໍໃຈອີກອັນໜຶ່ງກໍ່ແມ່ນຜ່ານການປະຕິບັດມະຕິ

໕໑ ຂອງກົມການເມືອງສູນກາງພັກ ວ່າດ້ວຍ ການຫັນລົງຮາກຖານ ຢ່າງແຂງແຮງນັ້ນ ສະພາບການຢູ່ທ້ອງຖິ່ນ, ຮາກຖານໃນທົ່ວປະເທດ ໄດ້ມີການຫັນປ່ຽນຢ່າງຈະແຈ້ງ; ປະຊາຊົນເຜົ່າຕ່າງໆ ມີຄວາມສາມັກຄີກັນດີ, ເປັນເຈົ້າໃນການອອກແຮງງານປະດິດສ້າງແລະການດຳລົງຊີວິດຂອງຕົນ, ຫ້າວຫັນໃນການຜະລິດທຸລະກິດ, ປະຕິບັດປະຊາທິປະໄຕໃນການເລືອກຕັ້ງເອົາຕົວແທນຜູ້ທີ່ເໝາະສົມຂອງຕົນເຂົ້າໃນການຈັດຕັ້ງຂອງສະພາປະຊາຊົນ, ອຳນາດການປົກຄອງ ແລະ ອົງການຈັດຕັ້ງມະຫາຊົນຂັ້ນຕ່າງໆ, ປະກອບສ່ວນປົກປັກຮັກສາ ແລະ ສ້າງສາບ້ານຊ່ອງຂອງຕົນເປັນຢ່າງດີ. ຜ່ານພຶດຕິກຳດັ່ງກ່າວພວກເຮົາໄດ້ບຳລຸງຍົກສູງທັດສະນະມະຫາຊົນ ແລະຄວາມສາມາດ ດ້ານຕ່າງໆ ຂອງພະນັກງານ ສະມາຊິກພັກຂັ້ນຕົ້ນອີກ, ເຮັດໃຫ້ການພົວພັນລະຫວ່າງພັກ–ລັດ ກັບປະຊາຊົນ ມີຄວາມສະໜິດແໜ້ນກວ່າເກົ່າ.

- ໃນຂົງເຂດວຽກງານປ້ອງກັນຊາດ–ປ້ອງກັນຄວາມ ສະຫງົບ, ກຳລັງປ້ອງກັນຊາດ–ປ້ອງກັນຄວາມສະຫງົບຂອງພວກ ເຮົາ ເຖິງວ່າຈະມີຂໍ້ຫຍຸ້ງຍາກຫລາຍປະການກໍ່ຕາມ, ແຕ່ດ້ວຍແນວ ທາງປ້ອງກັນຊາດ–ປ້ອງກັນຄວາມສະຫງົບທົ່ວປວງຊົນ, ດ້ວຍ ນ້ຳໃຈຮັກຊາດ ແລະການເຂົ້າຮ່ວມຢ່າງແຂງແຮງ ຂອງປະຊາຊົນບັນດາເຜົ່າໃນວຽກງານປ້ອງກັນຊາດ–ປ້ອງກັນຄວາມສະຫງົບນັ້ນ ພວກເຮົາສາມາດທັບມ້າງການເຄື່ອນໄຫວມ້າງເພທຳລາຍຂອງສັດຕູໃຫ້ປະລາໄຊ

ລົງໃນຫລາຍຄັ້ງ, ປົກປັກຮັກສາເຂດນ້ຳແດນດິນ ແລະ ອະທິປະໄຕຂອງປະເທດເຮົາໄວ້ໄດ້ຢ່າງໝັ້ນຄົງ, ປ້ອງກັນການອອກແຮງ ງານເພື່ອສ້າງສາພັດທະນາປະເທດຊາດໃນສັນຕິພາບຂອງປະຊາຊົນເຜົ່າຕ່າງໆເຮົາໄວ້ໄດ້. ໃນນັ້ນໄດ້ດັບສູນຫລາຍກອງກຳລັງ ປະກອບອາວຸດ ແລະພວກນັກສືບສອດແນມຂອງສັດຕູ, ມ້າງຮາກຖານ ໃຕ້ດິນຂອງພວກປະຕິການຈຳນວນໜຶ່ງ, ດັບສູນ ແລະຈັບໄດ້ທັງໝົດໜ່ວຍປະຕິການພັດຖິ່ນຫວຽດນາມ ຈາກປະເທດໄທ ທີ່ຜ່ານດິນລາວເຮົາເພື່ອແຊກຊຶມເຂົ້າຫວຽດນາມ. ໜ່ວຍພວກເຈີນກວາງໂດ ເປັນໜ່ວຍທີ ໔ ຂອງພວກປະຕິການພັດຖິ່ນຫວຽດນາມ ທີ່ຖືກດັບສູນ ຢ່າງຮາບກ້ຽງຢູ່ໃນດິນລາວ ໃນຫວ່າງບໍ່ດົນມານີ້.

- ໃນວຽກງານພົວພັນຕ່າງປະເທດ ແລະການພົວພັນສາກົນ, ການປະຕິບັດແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ , ເປັນເຈົ້າຕົນເອງ ແລະມິດຕະພາບຂອງພັກ ແລະລັດເຮົາ ໄດ້ສ້າງຂໍ້ສະດວກໃຫ້ແກ່ການປົກປັກຮັກສາ ແລະສ້າງສາປະເທດຊາດ, ເຊີດຊູອິດທິພົນ ແລະຖານະຂອງປະເທດເຮົາໃຫ້ສູງຂຶ້ນໃນເວທີສາກົນ.

ການຢ້ຽມຢາມມິດຕະພາບຢ່າງເປັນທາງການທີ່ປະເທດເຮົາຂອງຄະນະຜູ້ແທນຂັ້ນສູງຂອງພັກກອມມູນິດຫວຽດນາມ ເຊິ່ງນຳໂດຍສະຫາຍເລຂາທິການໃຫຍ່ ຫງວຽນວັນ-ລິງ ພ້ອມກັບ ສະຫາຍ ໂດເມື່ອຍ ປະທານສະພາລັດຖະມົນຕີ ແຫ່ງ ສ.ສ. ຫວຽດນາມນັ້ນ ກໍ

ໄດ້ຮັບຜົນສຳເລັດຢ່າງຈົບງາມ. ທັງສອງຝ່າຍໄດ້ຢືນຢັນຄືນອີກເທື່ອໜຶ່ງວ່າ ຈະເພີ່ມທະວີນ້ຳໃຈສາມັກຄີສູ້ຮົບ, ການພົວພັນ ມິດຕະພາບແບບພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດແລະປະຊາຊົນສອງຊາດ ບົນຈິດໃຈແຫ່ງການປ່ຽນແປງໃໝ່, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະຊ່ວຍເຫຼືອເຊິ່ງກັນແລະກັນຖານອ້າຍນ້ອງ ໂດຍຖືເອົາຄຸນນະພາບ ແລະປະສິດທິຜົນໃນການ ຮ່ວມມືເປັນສຳຄັນ.

ການພົບປະລະຫວ່າງ ຂ້າພະເຈົ້າ ກັບສະຫາຍເລຂາທິການໃຫຍ່ ກອກບາຊົບ ໃນເດືອນທັນວາປີກາຍນີ້ ກໍ່ໄດ້ກາຍເປັນຂີດໝາຍສຳຄັນແຫ່ງການຮັດແໜ້ນສາຍພົວພັນມິດຕະພາບ ແລະເພີ່ມທະວີການຮ່ວມມືຮອບດ້ານ ລະຫວ່າງ ສ.ປ.ປ.ລາວ ກັບສະຫະພາບໂຊວຽດຕາມທິດຍົກສູງປະສິດທິຜົນ ແລະຕ່າງຝ່າຍຕ່າງມີຜົນປະໂຫຍດ. ໃນການພົບປະຄັ້ງນີ້ ສະຫາຍ ກອກບາຊົບ ໄດ້ສະແດງຄວາມ ຊົມເຊີຍຕໍ່ຜົນສຳເລັດອັນສຳຄັນເບື້ອງຕົ້ນທີ່ພັກ, ລັດຖະບານ ແລະປະຊາຊົນລາວຍາດມາໄດ້ໃນພາລະກິດປ່ຽນແປງໃໝ່ໂດຍສະເພາະແມ່ນຕໍ່ການນຳໃຊ້ຢ່າງປະດິດສ້າງນະໂຍບາຍເສດຖະກິດແຜນໃໝ່ຂອງ ເລີ່ມເຂົ້າໃນເງື່ອນໄຂ ແລະສະພາບການຕົວຈິງຂອງລາວ, ພ້ອມກັນນັ້ນກໍ່ໄດ້ຢືນຢັນນຳກັນວ່າຈະສືບຕໍ່ດຳເນີນການປ່ຽນແປງໃໝ່ເທື່ອລະກ້າວຢ່າງໜັກແໜ້ນ ເພື່ອຈຸດໝາຍສັງຄົມນິຍົມ.

ພວກເຮົາໄດ້ເຮັດສຸດຄວາມສາມາດຂອງຕົນ ເພື່ອສະໜັບສະໜູນພາລະກິດອັນເປັນທຳຂອງປະຊາຊົນກຳປູເຈຍອ້າຍນ້ອງ, ຕັ້ງໜ້າປະກອບສ່ວນເຂົ້າໃນພາລະກິດແຫ່ງການຕໍ່ສູ້ແກ້ໄຂບັນຫາ ກຳປູເຈຍດ້ວຍວິທີການການເມືອງທີ່ຍຸດຕິທຳ, ສົມເຫດສົມຜົນ ແລະສອດຄ່ອງກັບສະພາບການຕົວຈິງຢູ່ກຳປູເຈຍໃນປະຈຸບັນ, ບົນພື້ນຖານເຄົາລົບສິດຕັດສິນໂດຍຕົນເອງຂອງປະຊາຊົນກຳປູເຈຍ, ສະກັດກັ້ນບໍ່ໃຫ້ກຸ່ມດັບສູນເຊື້ອຊາດໂປນປົດກັບຄືນມາມີອຳນາດຢູ່ກຳປູເຈຍ.

ການໄປຢ້ຽມຢາມສາທາລະນະລັດປະຊາຊົນຈີນ ຂອງຄະນະຜູ້ແທນລັດຖະບານເຮົາ ໄດ້ເຮັດໃຫ້ສາຍພົວພັນລະຫວ່າງພັກ, ລັດເຮົາ ກັບພັກກອມມູນິດຈີນ ແລະລັດຖະບານສາທາລະນະລັດ ປະຊາຊົນຈີນຄືນສູ່ປົກກະຕິ ແລະໄດ້ເພີ່ມທະວີສາຍພົວພັນມິດຕະພາບທີ່ມີມາແຕ່ດົນນານ ລະຫວ່າງປະຊາຊົນສອງປະເທດລາວ-ຈີນ, ເປີດສັ່ງກາດອັນດີງາມໃຫ້ແກ່ການພົວພັນຮ່ວມມືໃນຫຼາຍດ້ານ ແລະ ຕ່າງຝ່າຍຕ່າງມີຜົນ ລະຫວ່າງປະເທດເຮົາ ກັບປະເທດສາທາລະນະລັດປະຊາຊົນຈີນສັງຄົມນິຍົມ.

ການໄປຢ້ຽມຢາມ ຍີ່ປຸ່ນ ແລະ ສາທາລະນະລັດຝະຣັ່ງຂອງຄະນະຜູ້ແທນລັດຖະບານເຮົາ ກໍ່ໄດ້ເຮັດໃຫ້ປະເທດດັ່ງກ່າວເຂົ້າໃຈດີກວ່າເກົ່າ ກ່ຽວກັບສະພາບການທາງດ້ານເສດຖະກິດ-ສັງຄົມແລະນະໂຍບາຍປ່ຽນແປງໃໝ່ຂອງພວກເຮົາ, ຍາດແຍ່ງໄດ້ການ ສະໜັບ

ສະໜຸນ, ການຊ່ວຍເຫຼືອຂອງປະເທດດັ່ງກ່າວໃຫ້ແກ່ການພັດທະນາເສດຖະກິດຂອງປະເທດເຮົາ.

ພວກເຮົາກໍ່ຍາດແຍ່ງໄດ້ການຊ່ວຍເຫຼືອ ແລະກູ້ຢືມທຶນຈາກພາຍນອກເພີ່ມຂຶ້ນຫຼາຍກວ່າເກົ່າຖ້າທຽບໃສ່ປີ ໑໙໘໘, ພຽງ ແຕ່ໜຶ່ງປີກວ່າ ພາຍຫຼັງທີ່ໄດ້ປະກາດໃຊ້ກົດໝາຍການລົງທຶນໄດ້ມີຫຼາຍບໍລິສັດຈາກຫຼາຍປະເທດໄດ້ຍື່ນຄຳຮ້ອງຂໍອະນຸຍາດລົງທຶນ ຢູ່ລາວຫຼາຍກວ່າຮ້ອຍໂຄງການ, ໃນນັ້ນ ໄດ້ຕົກລົງອະນຸມັດແລ້ວ ໘໐ ກວ່າໂຄງການ ເຊິ່ງມີມູນຄ່າກວ່າ ໗໐ ລ້ານໂດລາ.

ພວກເຮົາຂໍສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈ ຕໍ່ບັນດາປະເທດອ້າຍນ້ອງ ເພື່ອນມິດ ແລະຕໍ່ບັນດາອົງການຈັດຕັ້ງສາກົນທີ່ໄດ້ໃຫ້ການຊ່ວຍເຫຼືອແກ່ພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດຂອງພວກເຮົາຢ່າງມີປະສິດທິຜົນ.

- ບັນດາໝາກຜົນ ແລະໄຊຊະນະສຳຄັນໃນຫຼາຍດ້ານ ທີ່ກ່າວມາເທິງນັ້ນ, ຢັ້ງຢືນວ່າ ແນວທາງຂອງພັກ ແລະພາລະກິດແຫ່ງການປ່ຽນແປງໃໝ່ທີ່ພັກ ແລະລັດເຮົາເປັນຜູ້ລິເລີ່ມນັ້ນແມ່ນຖືກຕ້ອງ, ປະດິດສ້າງ, ທັນການ ແລະສອດຄ່ອງກັບສະພາວະຄວາມ ເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາ, ສອດຄ່ອງກັບ ກົດເກນເສດຖະກິດພາວະວິໄສ, ກັບຄວາມມຸ່ງມາດປາຖະໜາ ແລະຜົນປະໂຫຍດຂອງປະຊາຊົນເຮົາ ກໍ່ຄືທ່າອ່ຽງລວມຂອງຍຸກສະໄໝ. ຜົນ

ສຳເລັດດັ່ງກ່າວນັ້ນ ຕິດພັນສະໜິດແໜ້ນກັບພາກພື້ນຂອງວຽກງານ ກໍ່ສ້າງພັກ, ກັບການເຝິກຝົນຫລໍ່ຫລອມຝູງແຖວພະນັກງານ,ການປ່ຽນແປງໃໝ່ການນຳພາຂອງພັກ ແລະການເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ, ຕິດພັນກັບນ້ຳໃຈຮັກຊາດອັນແທ້ຈິງຂອງປະຊາຊົນເຮົາ,ສະແດງອອກເຖິງຄວາມເປັນເອກະພາບທາງດ້ານແນວຄິດ ແລະການກະທຳ, ຢຶດໝັ້ນໃນບັນດາຫລັກການ ແລະ ທັດສະນະຂອງພັກ ແລະລັດເຮົາໃນພາລະກິດແຫ່ງການປ່ຽນແປງໃໝ່.

ຕາງໜ້າຄະນະບໍລິຫານງານສູນກາງພັກ ແລະສະພາ ລັດຖະມົນຕີ, ຂ້າພະເຈົ້າຂໍສະແດງຄວາມຍ້ອງຍໍຊົມເຊີຍຢ່າງສຸດອົກສຸດໃຈຕໍ່ພີ່ນ້ອງຮວມຊາດເຜົ່າຕ່າງໆ, ອ້າຍເອື້ອຍນ້ອງກຳມະກອນ, ຊາວກະສິກອນ, ປັນຍາຊົນ, ພໍ່ຄ້າຊາວຂາຍ, ຜູ້ຊົງຄຸນວຸດທິ,ພະສົງສາມະເນນ... ກຳລັງປະກອບອາວຸດ ປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບ, ພະນັກງານ, ພາລະກອນໃນຂະແໜງການຕ່າງໆ, ຂັ້ນຕ່າງໆ ທີ່ໄດ້ເຊີດຊູນ້ຳໃຈຮັກຊາດ, ນ້ຳໃຈສາມັກຄີປອງດອງ,ເສີມຂະຫຍາຍນ້ຳໃຈເພິ່ງຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ , ຜ່ານຜ່າຂໍ້ຫຍຸ້ງຍາກອຸປະສັກນາໆ ປະການ, ສ້າງໄດ້ຜົນງານ ທີ່ຈົບງາມຫລາຍປະການໃນພາລະກິດປົກປັກຮັກສາປະເທດຊາດ, ປົກປັກຮັກສາລະບອບໃໝ່ ແລະສ້າງສາປະເທດຊາດ. ຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍຊົມເຊີຍຕໍ່ພະນັກງານອາວຸໂສທີ່ໄດ້ເອົາໃຈໃສ່ ສຶກ

ສາອົບຮົມກໍ່ສ້າງຮຸ່ນຄົນສືບທອດ, ຮັກສາມູນເຊື້ອອັນດີງາມຂອງຊາດ, ຂອງການປະຕິວັດ; ປຸກລະດົມລູກຫລານປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ; ປົກປັກຮັກສາ ແລະ ເສີມຂະຫຍາຍໝາກຜົນຂອງການປະຕິວັດເປັນຢ່າງດີ. ຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍຊົມເຊີຍເປັນພິເສດຕໍ່ຄວາມບຸກບືນພະຍາຍາມຂອງພວກຫລານຊາວໜຸ່ມ, ເຍົາວະຊົນ ທີ່ໄດ້ປະກອບສ່ວນເຂົ້າໃນພາລະກິດລວມຂອງຊາດ, ແລະຫວັງວ່າ ພວກຫລານຈະພະຍາຍາມ ເຝິກຝົນຫລໍ່ຫລອມຕົນເອງໃຫ້ກາຍເປັນຜູ້ເປັນເຈົ້າຂອງປະເທດຊາດ ໃນອະນາຄົດຢ່າງສົມກຽດ.

ເນື່ອງໃນໂອກາດນີ້, ຂ້າພະເຈົ້າ ກໍ່ຂໍຝາກຄວາມຢ້ຽມຢາມອັນອົບອຸ່ນ ແລະສົ່ງພອນໄຊປີໃໝ່ອັນປະເສີດໄປຍັງຄົນລາວ ທີ່ອາໄສຢູ່ຕ່າງປະເທດ ເຊິ່ງເຖິງວ່າຈະຢູ່ຫ່າງໄກຈາກບ້ານເກີດເມືອງນອນຂອງຕົນ ແຕ່ ກໍ່ຍັງຮັກສາມູນເຊື້ອອັນດີງາມຂອງຊາດ, ມີຄວາມຄິດຮອດຄິດເຖິງປະເທດຊາດ, ຈົ່ງຄິດສະເໝີວ່າ ພີ່ນ້ອງຊາວລາວ ຢູ່ພາຍໃນປະເທດຍາມໃດກໍ່ຍິນດີຕ້ອນຮັບທຸກໆ ຄົນທີ່ຢາກກັບມາ ບ້ານເກີດເມືອງນອນ ເພື່ອທຳມາຫາກິນໂດຍຖືກຕ້ອງຕາມກົດໝາຍ ຂອງບ້ານເມືອງ, ປະກອບສ່ວນຢ່າງສົມກຽດເຂົ້າໃນການສ້າງສາພັດທະນາປະເທດຊາດອັນແສນຮັກຂອງຕົນ.

ຂ້າພະເຈົ້າກໍ່ຂໍຊົມເຊີຍຊາວຕ່າງດ້າວທີ່ດຳລົງຊີວິດ ແລະທຳ

ມາທາກິນຢູ່ລາວ ໄດ້ເຄົາລົບນັບຖືຣີດຄອງປະເພນີ ຂອງປະຊາຊົນລາວ, ເຄົາລົບນັບຖືນະໂຍບາຍ ແລະກົດໝາຍຕ່າງໆ ຂອງ ສ. ປ ປ.ລາວ, ສາມັກຄີກັບປະຊາຊົນລາວຊ່ວຍເຫລືອເຊິ່ງກັນ ແລະ ກັນ ໃນການກໍ່ສ້າງເສດຖະກິດ-ວັດທະນະທຳ, ສ້າງຊີວິດອັນຜາສຸກ.

ບັນດາທ່ານ ທີ່ນັບຖື,

ເຖິງວ່າ ຈະມີຄວາມພາກພູມໃຈຕໍ່ຜົນງານ ແລະ ໄຊຊະນະ ທີ່ຍາດມາໄດ້ນັ້ນກໍ່ຕາມ, ແຕ່ ພວກເຮົາກໍ່ຄວນເຫັນແຈ້ງວ່າສະພາບການໃນປະເທດເຮົາຍັງມີຂໍ້ຫຍຸ້ງຍາກອຸປະສັກຫລາຍປະການ, ພວກເຮົາຍັງມີບັນຫາຄົງຄ້າງ ແລະຂໍ້ຂາດຕົກບົກພ່ອງ ນັບທັງຂໍ້ຜິດ ພາດຫລາຍອັນຢູ່ໃນລະດັບທີ່ແຕກຕ່າງກັນ, ການປ່ຽນແປງໃໝ່, ກໍ່ຍັງບໍ່ທັນຄົບຊຸດ ແລະບໍ່ທັນໜັກແໜ້ນເທື່ອ.

ບົນຈິດໃຈສະແຫວງຫາຄວາມຈິງ, ກອງປະຊຸມຄົບຄະນະຄັ້ງທີ່ ໘ ຂອງຄະນະບໍລິຫານງານສູນກາງພັກຫວ່າງບໍ່ດົນມານີ້ ໄດ້ໄຈ້ແຍກສະພາບການພາຍໃນປະເທດປີ ໑໙໘໙ ຢ່າງວິທະຍາສາດ, ໄດ້ຢືນຢັນວ່າ ແນວທາງແຫ່ງການປ່ຽນແປງໃໝ່ຂອງພັກ ແລະລັດ ເຮົາແມ່ນຖືກຕ້ອງ, ປະດິດສ້າງ ແລະທັນການ; ພາຍໃຕ້ການ ນຳພາຂອງຄະນະບໍລິຫານງານສູນກາງພັກ ແລະດ້ວຍຄວາມບຸກບືນຂອງທົ່ວພັກ, ທົ່ວປວງຊົນ, ພວກເຮົາໄດ້ນຳເອົາການປະຕິວັດຂອງປະເທດ

ເຮົາກ້າວຂຶ້ນຕື່ມອີກກ້າວໜຶ່ງ. ບໍ່ມີພຽງແຕ່ພັກ ແລະປະຊາຊົນເຮົາເທົ່ານັ້ນ ໄດ້ຕີລາຄາຄືແນວນີ້, ກະທັ້ງເຖິງເພື່ອນມິດແລະແຂກຕ່າງປະເທດ ເຊິ່ງແຕ່ກ່ອນໄດ້ເຄີຍມາຢ້ຽມຢາມລາວ ເມື່ອໄດ້ມາ ເຫັນປະເທດເຮົາອີກເທື່ອໃໝ່ໃນເວລານີ້ ຕ່າງກໍ່ມີຄວາມຮູ້ສຶກຍິນດີ ແລະຊົມເຊີຍບາດກ້າວປ່ຽນແປງໃໝ່ຂອງປະເທດເຮົາ.

ຢ່າງໃດກໍ່ດີ, ດ້ວຍສະຕິຄວາມຮັບຜິດຊອບສູງ ແລະດ້ວຍຈິດໃຈຕິຊົມຕົນເອງ ແລະຕິຊົມກັນຢ່າງເຂັ້ມງວດ, ຄະນະບໍລິຫານງານສູນກາງພັກກໍ່ໄດ້ຕີລາຄາວ່າ: " ໝາກຜົນທີ່ບັນລຸມາໄດ້ນັ້ນ ແມ່ນຍັງບໍ່ທັນສົມຄູ່ກັບກໍາລັງເຫື່ອແຮງຂອງປະຊາຊົນ ແລະຂອງທັງພັກ; ບໍ່ທັນສົມຄູ່ກັບຄວາມອາດສາມາດບົ່ມຊ້ອນຂອງປະເທດຊາດ ແລະ ການຊ່ວຍເຫຼືອຂອງສາກົນ, ບໍ່ທັນຕອບສະໜອງ ໄດ້ຄວາມມຸ່ງມາດປາຖະໜາອັນຊອບທໍາຂອງປະຊາຊົນເຜົ່າຕ່າງໆ ພວກເຮົາເທື່ອ". ກອງປະຊຸມໄດ້ໄຈ້ແຍກເຖິງບັນດາສາເຫດພາວະວິໄສ ແລະອັດຕະວິໄສຂອງສະພາບການດັ່ງກ່າວ.

ສາເຫດພາວະວິໄສ ແມ່ນຍ້ອນພວກເຮົາເລີ່ມຈາກເສດຖະກິດທີ່ຫຼ້າຫຼັງເກີນໄປ ເຊິ່ງໃນນັ້ນ ສ່ວນໃຫຍ່ຍັງມີລັກສະນະ ເຄິ່ງທໍາມະຊາດ, ກຸ້ມຕົນເອງພໍໃຜພໍລາວ, (ໃຜໆ ກໍ່ຮູ້ແລ້ວວ່າປະເທດເຮົາແມ່ນປະເທດໜຶ່ງໃນບັນດາປະເທດທີ່ສະຫະປະຊາຊາດໄດ້ ຈັດເຂົ້າບັນຊີປະເທດຍາກຈົນທີ່ສຸດໃນໂລກ, ພື້ນຖານວັດຖຸເຕັກນິກ,ພື້ນ

ຖານໂຄງລ່າງຍັງອ່ອນນ້ອຍເກີນໄປ; ຂາດພະນັກງານ,ກຳມະກອນຜູ້ຊຳນານງານ, ຂາດພະນັກງານຄຸ້ມຄອງອຳນວຍຄວບຄຸມ ຢ່າງໜັກໜ່ວງ, ດິນຟ້າອາກາດໃນຫລາຍປີມານີ້ ບໍ່ປົກກະຕິ), ຄວາມ ອາດສາມາດບົ່ມຊ້ອນຂອງປະເທດຊາດ ແມ່ນໃຫຍ່ຫລວງທີ່ສຸດ, ແຕ່ ບໍ່ທັນມີເງື່ອນໄຂເພື່ອເສີມຂະຫຍາຍມັນໄດ້ເທື່ອ, ການຜະລິດໃນປະຈຸບັນບໍ່ທັນພຽງພໍສຳລັບໃຊ້ສອຍ, ລາຍຮັບ ບໍ່ພຽງພໍສຳລັບລາຍຈ່າຍ; ຂາເຂົ້າຫລາຍກວ່າຂາອອກ, ໄພເງິນເຟີ້ເພີ່ມຂຶ້ນ, ຄ່າຂອງ ເງິນກີບຫລຸດຕ່ຳລົງ... ແຕ່ ສາຍເຫດໜຶ່ງອີກ ທີ່ຈະຕ້ອງຮັບຮູ້ແລະເຫັນແຈ້ງນຳກັນແມ່ນບັນດາອິດທິກຳລັງຈັກກະພັດ, ປະຕິການ,ພວກສວຍໂອກາດ ແລະພວກຄົນບໍ່ດີທີ່ປອງທຳລາຍມ້າງເພປະເທດ ພວກເຮົານັບມື້ນັບເປີດແປນ ແລະໂຫດຮ້າຍຢູ່ຕະຫລອດເວລາ,ພວກເຂົາຊອກທຸກວິທີທາງເພື່ອສວຍໃຊ້ຊ່ອງວ່າງຂອງພວກເຮົາ. ບັນດາກຳລັງປໍລະປັກໄດ້ຖືເອົາ ສະພາບວິກິດການຢູ່ເອີຣົບຕາເວັນອອກພວມເປັນກາລະໂອກາດອັນສຸດທີ່ອຳນວຍ, ດັ່ງນັ້ນ ພວກເຂົາຈຶ່ງອອກແຮງ ດຳເນີນສົງຄາມຈິດຕະສາດ, ແບ່ງແຍກພາຍໃນຂອງພວກເຮົາ, ແບ່ງແຍກພວກເຮົາ ກັບເພື່ອນມິດສາກົນ ແນໃສ່ເຮັດໃຫ້ພວກເຮົາ ອ່ອນເພຍລົງ ໜ່ວງປະຕິບັດການຫັນປ່ຽນໂດຍສັນຕິ, ກໍ່ຄວາມວຸ້ນວາຍແລະລຸກຮື້ຂຶ້ນກໍ່ການກະບົດໂຄ່ນລົ້ມ. ດັ່ງນັ້ນ ພວກເຮົາຕ້ອງ ເດັດດ່ຽວເຊີດຊູສະຕິລະວັງຕົວຢູ່ສະເໝີ.

ກ່ຽວກັບສາຍເຫດອັດຕະວິໄສ, ກອງປະຊຸມຄົບຄະນະ ຂອງສູນກາງພັກຄັ້ງທີ່ ໔ ກໍໄດ້ເນັ້ນໜັກວ່າ ສາຍເຫດຕົ້ນຕໍແມ່ນຂອງຊີ້ນຳ, ອຳນວຍຄວບຄຸມ ແລະຄຸ້ມຄອງ,ເປັນຕົ້ນແມ່ນ ການຈັດຕັ້ງປະຕິບັດຂອງພວກເຮົາຍັງອ່ອນແອເກີນໄປ, ຍັງມີຫລາຍຈຸດອ່ອນ ແລະຂໍ້ຂາດຕົກບົກພ່ອງທີ່ຍັງຈະຕ້ອງອອກແຮງກຳຈັດແກ້ໄຂ. ໃນດ້ານອື່ນ, ກອງປະຊຸມກໍໄດ້ຕຳນິວິຈານຢ່າງເຄັ່ງຄັດຕໍ່ພະນັກງານ, ສະມາຊິກພັກຈຳນວນໜຶ່ງທີ່ຕິດພະຍາດອາດຍາສິດ, ຫ່າງເຫີນມະຫາຊົນ, ກໍຄື ເສຽທາດຂາດຄຸນ ອັນພາໃຫ້ເກີດຜົນສະທ້ອນບໍ່ດີຕໍ່ອິດທິພົນຂອງພັກ ແລະຄວາມເຊື່ອໝັ້ນຂອງມະຫາຊົນຕໍ່ພັກ.

ພັກເຮົາ ເດັດດ່ຽວເສີມຂະຫຍາຍຈຸດດີ ແລະກຳຈັດແກ້ໄຂຂໍ້ຂາດຕົກບົກພ່ອງ ແລະຜິດພາດ. ອອກແຮງເຝິກຝົນຫລໍ່ຫລອມ ຕົນເອງ ເພື່ອສ້າງພັກໃຫ້ເຂັ້ມແຂງ, ເຊີດຊູການນຳພາຂອງພັກ ໃຫ້ທຽມທັນກັບໜ້າທີ່ອັນໃຫຍ່ຫລວງ ແລະໜັກໜ່ວງຂອງການປ່ຽນແປງໃໝ່, ເພີ່ມທະວີຄວາມສາມັກຄີພາຍໃນ, ພົວພັນສະໜິດແໜ້ນກັບປະຊາຊົນ, ປັບປຸງຄວາມເຊື່ອໝັ້ນຂອງມະຫາຊົນຕໍ່ພັກ, ຕັດສິນໃຈ ນຳເອົາການປ່ຽນແປງໃໝ່ກ້າວຂຶ້ນຢ່າງຄົບຊຸດ, ແຂງແຮງ ແລະໜັກແໜ້ນກວ່າເກົ່າ ແນໃສ່ປະຕິບັດສອງໜ້າທີ່ຍຸດທະສາດ ເຊິ່ງກອງປະຊຸມໃຫຍ່ຄັ້ງທີ່ IV ຂອງພັກວາງອອກນັ້ນ ໃຫ້ປະກົດຜົນເປັນຈິງ.

ບັນດາທ່ານ ທີ່ນັບຖື,

ພວກເຮົາກ້າວສູ່ປີ ໑໙໙໐ ໃນສະພາບເວດລ້ອມຂອງສາກົນພວມມີການຜັນແປໄປຢ່າງສັບສົນທີ່ສຸດ, ໂດຍສະເພາະແມ່ນຢູ່ບັນດາປະເທດສັງຄົມນິຍົມເອີຣົບຕາເວັນອອກພວມເກີດວິກິດການຮອບດ້ານ ແລະຮ້າຍແຮງທັງທາງດ້ານການເມືອງ, ເສດຖະກິດ ແລະສັງຄົມ. ບັນດາພັກກອມມູນິດ ແລະ ກຳມະກອນພວມຖືກພວກຈັກກະພັດ ແລະບັນດາອິດທິກຳລັງປະຕິການຕ້ານສັງຄົມນິຍົມ ແລະລັດທິສວຍໂອກາດທັບຖົມໂຈມຕີ ແລະເຮັດໃຫ້ພັກຂາດຄວາມສັກສິດ, ກ້າວໄປເຖິງລົບລ້າງບົດບາດການນຳພາຂອງພັກ.

ຜ່ານການຕິດຕາມເຫັນວ່າ ການຜັນແປຂອງສະພາບການທີ່ກ່າວມາເທິງນັ້ນມີທັງສາຍເຫດອັດຕະວິໄສ ແລະພາວະວິໄສ, ແລະຢູ່ໃນແຕ່ລະປະເທດກໍ່ມີສາຍເຫດຂອງໃຜລາວຍ້ອນເງື່ອນໄຂປະຫວັດສາດຂອງແຕ່ລະປະເທດ.

ຈັກກະພັດນິຍົມ ແລະບັນດາອິດທິກຳລັງປະຕິການພວມໄດ້ທ່າເພື່ອອອກແຮງມ້າງເພທຳລາຍບັນດາປະເທດສັງຄົມນິຍົມ, ແຕ່ເຖິງຢ່າງໃດກໍ່ດີ ພວກເຂົາກໍ່ບໍ່ສາມາດເຮັດໄດ້ຕາມໃຈມັກ, ຄວາມສາມາດຂອງພວກເຂົາມີຈຳກັດ, ເພາະຢູ່ພາຍໃນລະບົບຈັກກະພັດນິຍົມກໍ່ພວມປະສົບວິກິດການ ແລະຄວາມຂັດແຍ້ງນັບມື້ນັບຂ້ຽວຂາດ ເຊັ່ນດຽວກັນ. ຍິ່ງໄປກວ່ານັ້ນ, ຮາກຖານເສດຖະກິດ, ສັງຄົມ, ການ

ເມືອງຂອງຊົນຊັ້ນຂູດຣີດຢູ່ໃນບັນດາປະເທດສັງຄົມນິຍົມ ໄດ້ຖືກລົບລ້າງໂດຍພື້ນຖານແລ້ວ, ສ່ວນຣາກຖານເສດຖະກິດ, ສັງຄົມ, ການເມືອງ, ແນວຄິດແລະຄຸນສົມບັດຂອງສັງຄົມນິຍົມ ຊ້ຳພັດໄດ້ຢັ່ງຣາກລົງເລິກໃນປະເທດເຫລົ່ານັ້ນ, ຈັກກະພັດ ບໍ່ແມ່ນຈະ ປະຕິບັດການຫັນປ່ຽນໂດຍສັນຕິໄດ້ຢ່າງງ່າຍດາຍ ແລະ ປ່ຽນປີ້ນທ່າອ່ຽງຂອງຍຸກສະໄໝຄື ຍຸກສະໄໝແຫ່ງການຂ້າມຜ່ານຈາກທຶນນິຍົມໄປສູ່ສັງຄົມນິຍົມໃນຂອບເຂດທົ່ວໂລກນັ້ນໄດ້.

ພວກເຮົາພວມເອົາໃຈໃສ່ຕິດຕາມ ແລະ ມີຄວາມເປັນຫ່ວງເປັນໃຍກໍ່ຄື ມີຄວາມເຫັນໃຈຕໍ່ບັນດາພັກ ແລະ ປະເທດອ້າຍນ້ອງທີ່ພວມປະເຊີນໜ້າກັບຂໍ້ຫຍຸ້ງຍາກ ອຸປະສັກໃຫຍ່ຫລວງດັ່ງກ່າວ. ແຕ່, ພວກເຮົາເຊື່ອໝັ້ນວ່າ ດ້ວຍການຊອກຫາເສັ້ນທາງ, ມາດຕະການແລະບາດກ້າວເດີນທີ່ຖືກຕ້ອງ, ເໝາະສົມໃຫ້ແກ່ການປະຕິຮູບ ແລະປ່ຽນແປງໃໝ່, ດ້ວຍຄວາມເດັດດ່ຽວກຳຈັດແກ້ໄຂຂໍ້ຜິດພາດ, ຂໍ້ຂາດຕົກບົກພ່ອງຂອງຕົນ ແນ່ນອນວ່າ ບັນດານັກກອມມູນິດທີ່ແທ້ຈິງໃນບັນດາປະເທດສັງຄົມນິຍົມ ຈະຟື້ນຟູຄວາມເຊື່ອໝັ້ນຂອງມະຫາຊົນຄືນມາໄດ້ ແລະນຳເອົາປະເທດຊາດຫລຸດພົ້ນຈາກວິກິດການ ແລະນຳເອົາພາລະກິດປະຕິວັດສັງຄົມນິຍົມສືບຕໍ່ກ້າວຂຶ້ນ ຕາມທ່າອ່ຽງຂອງຍຸກສະໄໝ.

ຫວ່າງບໍ່ເທົ່າໃດເດືອນມານີ້, ພະນັກງານ ສະມາຊິກພັກເຮົາ,

ປະຊາຊົນຊັ້ນຄົນຕ່າງໆ ໄດ້ເກີດມີຄວາມກັງວົນໃຈ, ເປັນຫ່ວງເປັນໄຍນຳສະພາບການຜັນແປຢູ່ສະຫະພາບໂຊວຽດ ແລະ ເອີຣົບຕາວັນອອກ. ຄວາມຫ່ວງໄຍດັ່ງກ່າວນັ້ນ ແມ່ນຖືກຕ້ອງ, ສະແດງເຖິງສະຕິການເມືອງ ແລະນ້ຳໃຈຮັບຜິດຊອບຂອງປະຊາຊົນເຮົາຕໍ່ພາລະກິດປະຕິວັດຂອງຕົນ ແລະຂອງອ້າຍນ້ອງ, ເພື່ອນມິດໃນໂລກ. ຢ່າງໃດກໍ່ດີ ສະພາບການທີ່ກ່າວມາເທິງນັ້ນ ແມ່ນອາດຈະມີຜົນກະທົບເຖິງການປົກປັກຮັກສາ ແລະສ້າງສາປະເທດຊາດ, ເຖິງພາລະກິດປ່ຽນແປງໃໝ່ຂອງພວກເຮົາ. ແຕ່ ພຶດຕິກຳດັ່ງກ່າວກໍ່ເປັນບົດຮຽນອັນລ້ຳຄ່າສຳລັບການປະຕິວັດຂອງພວກເຮົາ. ພັກເຮົາ ໄດ້ໄຈ້ແຍກ ສາຍເຫດຂອງວິກິດການດັ່ງກ່າວ ແລະຖອດຖອນໄດ້ບົດຮຽນອັນສຳຄັນຄື: ຕ້ອງຍົກສູງສະຕິລະວັງຕົວຕໍ່ກົນອຸບາຍແລະເລ່ຫລ່ຽມຂອງສັດຕູ, ເພີ່ມທະວີຄວາມສາມັກຄີທົ່ວປວງຊົນ, ພ້ອມກັນນັ້ນ ກໍ່ຕ້ອງເດັດດ່ຽວປະຕິບັດການປ່ຽນແປງໃໝ່ຕາມຫລັກການທີ່ໄດ້ວາງອອກ, ຕ້ອງເພີ່ມທະວີແລະປ່ຽນແປງໃໝ່ການນຳພາຂອງພັກ, ຮັກສາສາຍພົວພັນແບບກາຍອິນຊີລະຫວ່າງພັກ ແລະປະຊາຊົນ.

ໃນກອງປະຊຸມອັນຄຶກຄື້ນນີ້, ຂ້າພະເຈົ້າຂໍເນັ້ນຕື່ມບາງບັນຫາຕົ້ນຕໍ ເພື່ອໃຫ້ພວກເຮົາໄດ້ພ້ອມກັນ ແລກປ່ຽນຄວາມຄິດ ຄວາມເຫັນ, ສົນທະນາຢ່າງມີປະຊາທິປະໄຕ ແນໃສ່ໄປເຖິງບ່ອນເປັນເອກະພາບນຳກັນຢ່າງເລິກເຊິ່ງ ແລະ ບົນພື້ນຖານຄວາມຮັບຮູ້ດັ່ງກ່າວ

ເພື່ອໂຄສະນາອະທິບາຍໃຫ້ປະຊາຊົນຊັ້ນຄົນຕ່າງໆເຂົ້າໃຈເປັນຢ່າງດີຄື:

໑)- ເພື່ອຮັບປະກັນໃຫ້ແກ່ພາລະກິດປ່ຽນແປງໃໝ່ໄດ້ຮັບໄຊຊະນະ, ກ່ອນອື່ນ ພວກເຮົາຕ້ອງ ເຊີດຊູນ້ຳໃຈຮັກຊາດອັນແທ້ຈິງ, ຈຳແນກມິດ-ສັດຕູຢ່າງຈະແຈ້ງ.

ບັນຫານີ້ ເຊິ່ງເປັນບັນຫາເກົ່າທີ່ສຸດ ແຕ່ ມີລັກສະນະສົດໆຮ້ອນໆໃນປະຈຸບັນຄື ຄວາມຮັບຮູ້ກ່ຽວກັບທາດແທ້ຂອງຈັກກະພັດນິຍົມນັ້ນເອງ. ເມີນບໍ່ວ່າຍ້ອນການຂະຫຍາຍຕົວຂອງການປະຕິວັດວິທະຍາສາດ-ເຕັກນິກ, ການພົວພັນຮ່ວມມືສາກົນໄດ້ຮັບການເປີດກວ້າງຈິ່ງເຮັດໃຫ້ຈັກກະພັດນິຍົມກາຍເປັນຄົນຮູ້ຜູ້ດີ, ພວກເຂົາປະຕິບັດຫຼັກການຢູ່ຮ່ວມກັນໂດຍສັນຕິຢ່າງເຂັ້ມງວດບໍ່ ? – ຕົວຈິງ ໄດ້ສະແດງອອກວ່າ ພວກເຂົາບໍ່ມີຈັກເທື່ອຈະປະລະກົນອຸບາຍທັບສູ້ມຂະບວນການຕໍ່ສູ້ ເພື່ອຄວາມເປັນເອກະລາດແຫ່ງຊາດ ແລະສັງຄົມນິຍົມ, ມ້າງເພທຳລາຍຂະບວນການປະຕິວັດ. ພວກເຂົາພຽງແຕ່ລອກຄາບເພື່ອໃຫ້ແທດເໝາະກັບການຂະຫຍາຍຕົວຂອງສະພາບການ, ແຕ່ ໃຈດຳອຳມະຫິດຂອງພວກເຂົາເມີນບໍ່ມີການປ່ຽນແປງແຕ່ຢ່າງໃດ. ນັບແຕ່ມື້ສ້າງຕັ້ງສາທາລະນະລັດປະຊາທິປະໄຕປະຊາຊົນລາວມານີ້, ພັກ, ລັດ ແລະປະຊາຊົນເຮົາ ຍາມໃດກໍ່ຢາກຢູ່ຮ່ວມກັນໂດຍສັນຕິ ກັບປະເທດຕ່າງໆ ທີ່ມີລະບອບການເມືອງຕ່າງກັນ, ຍຶດໝັ້ນນະໂຍບາຍສັນ

ຕິພາບ, ມິດຕະພາບແລະການຮ່ວມມືກັບບັນດາປະເທດຢູ່ໃນພາກພື້ນ ແລະໃນໂລກ. ແຕ່ ອາດຈະເວົ້າໄດ້ວ່າ ບໍ່ມີໃຜທີ່ພວກຈັກກະພັດ ແລະປະຕິການປະໃຫ້ພວກເຮົາສ້າງສາປະເທດຊາດໃນສັນຕິພາບໄດ້ ຢ່າງສະຫງົບ ພາຍຫລັງທີ່ຖືກສົງຄາມທຳລາຍມາແລ້ວເປັນຫລາຍສິບ ປີ. ພວກເຂົາໄດ້ປະຕິບັດກົນອຸບາຍເລ່ຫລ່ຽມຕ່າງໆ ນາໆ ເພື່ອກໍ່ ກວນ, ທຳລາຍ, ກໍ່ການກະບົດໂຄ່ນລົ້ມ, ເຊາະຊຶມ ຢຶດດິນແດນ,ລະ ເມີດຄວາມເປັນເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບ ຖ້ວນຂອງຊາດເຮົາ. ປະຊາຊົນລາວພວກເຮົາທົ່ວທັງຊາດໄດ້ ຮູ້ ແຈ້ງແລ້ວວ່າ ເລືອດຂອງນັກຮົບ ແລະປະຊາຊົນເຮົາ ຍັງສືບຕໍ່ໄຫລ ເພື່ອປົກປັກຮັກສາປະເທດຊາດ ແລະປົກປັກຮັກສາລະບອບໃໝ່. ແລະ ໃນມໍ່ໆ ມານີ້, ຂະນະທີ່ລັດທິຈັກກະພັດຂອງໂຣໂຄສະນາກ່ຽວກັບການ ຢຸດຕິສົງຄາມ ເຢັນລົງແລ້ວນັ້ນ ພວກເຂົາພັດສ້າງຕັ້ງສະຖານີໂທ ລະ ທັດຂະໜາດຍັກໃຫຍ່ຊື່ວ່າ ໂຣເຊມາກຕີ ເລັງໃສ່ປະເທດກູບາ, ນິກາ ຣາກວາ ແລະອາເມລິກາລາຕິນ ເພື່ອມ້າງເພທຳລາຍການປະຕິວັດ ຂອງບັນດາປະເທດໃນພາກພື້ນນີ້. ຍິ່ງໄປກວ່ານັ້ນອີກ, ພວກເຂົາ ໄດ້ລະດົມກຳລັງທັບອາກາດ, ກຳປັ່ນລົບ ເຊາະແຊງດ້ວຍອາວຸດເຂົ້າ ປະເທດປານາມາ ເຊິ່ງເປັນປະເທດໜຶ່ງເອກະລາດ ອະທິປະໄຕໂດຍ ກົງ ແລະເປີດແປນທີ່ສຸດ, ຈັບເອົາປະທານາທິບໍດີຂອງປະເທດນີ້ໄປ ລົງໂທດຢູ່ອາເມລິກາ ຍ້ອນວ່າ ບໍ່ປະຕິບັດຕາມຄຳສັ່ງຂອງພວກເຂົາ.

ໂດຍເຫັນແຈ້ງຕໍ່ກົນອຸບາຍ, ຄວາມດື້ດ້ານ ແລະທາດແທ້ທີ່ບໍ່ມີຫຍັງປ່ຽນແປງຂອງພວກຈັກກະພັດ ແລະອິດທິກຳລັງປະຕິການ ດັ່ງກ່າວເທິງນັ້ນ ພວກເຮົາ ຕ້ອງເຊີດຊູນ້ຳໃຈຮັກຊາດທີ່ແທ້ຈິງອັນເປັນມູນເຊື້ອຂອງປະຊາຊົນເຮົາຢ່າງບໍ່ຢຸດຢັ້ງ. ພວກເຮົາມີສິດເໝັນສ່ວນທີ່ຕ້ອງເອົາອ່າງທະນົງໃຈຕໍ່ຄວາມຮັກຊາດ, ຮັກກຽດສັກສີ ຂອງຄົນລາວເຜົ່າຕ່າງໆ ທີ່ຍາມໃດກໍ່ຍອມເສຍສະ ລະເພື່ອຄວາມ ເປັນເອກະລາດ, ອິດສະ ລະພາບແຫ່ງຊາດ ແລະປົກປັກຮັກສາ ປະເທດຊາດ. ປະຫວັດສາດຂອງຊາດຢືນຢັນແລ້ວວ່າ: ຄົນລາວຍອມຕາຍດີກວ່າຈະສູນເສຍປະເທດຊາດ. ອັນນັ້ນ ແມ່ນມູນເຊື້ອທີ່ ປະເສີດເລີດລ້ຳທີ່ສຸດ ຂອງຄົນລາວຮຸ່ນລູກ, ຮຸ່ນຫຼານຕ້ອງເພີ່ມພູນຄູນສ້າງແລະສືບຕໍ່ດ້ວຍກຽດ ແລະສັກສີຂອງຕົນ. ມູນເຊື້ອດັ່ງກ່າວນັ້ນ ໄດ້ກາຍເປັນພະລັງແຮງຊຸກດັນການປະຕິວັດຂອງປະເທດເຮົາກ້າວຈາກໄຊຊະນະນີ້ ສູ່ໄຊຊະນະໃໝ່ໃຫຍ່ຫຼວງກວ່າເກົ່າ. ດ້ວຍ ມູນເຊື້ອຮັກຊາດ, ປະຊາຊົນເຮົາຕ້ອງພ້ອມພຽງຮຽງໜ້າກັນອອກແຮງປົກປັກຮັກສາປະເທດຊາດ, ເດັດຂາດບໍ່ໃຫ້ໃຜມາແຕະຕ້ອງຄວາມເປັນເອກະລາດ, ອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງຊາດເຮົາ. ພວກເຮົາຕ້ອງຈື່ຈຳຄຳສອນຂອງປະທານ ໂຮ່ຈີມິນ ທີ່ເຄົາລົບຮັກທີ່ວ່າ: " ບໍ່ມີສິ່ງໃດປະເສີດເລີດລ້ຳກວ່າເອກະລາດ ແລະອິດສະລະພາບ". ຖ້າພວກເຮົາມີເອກະລາດ, ມີອິດສະລະພາບແລ້ວ ພວກ

ເຮົາກໍສາມາດສ້າງໃຫ້ມີທຸກສິ່ງທຸກຢ່າງໄດ້.

໔)- ຕ້ອງເພີ່ມທະວີຄວາມສາມັກຄີປອງດອງຊາດ.

ຄວາມສາມັກຄີປອງດອງຄົນລາວທັງຊາດເປັນມູນເຊື້ອອັນສັກກາລະ, ເປັນຈຸດພິເສດ ແລະ ເປັນລັກສະນະປະຈໍາຊາດອັນດີງາມຂອງປະຊາຊົນຄົນລາວເຜົ່າຕ່າງໆ. ຄວາມສາມັກຄີປອງດອງເຄີຍເປັນ ແລະກໍຍັງເປັນປັດໃຈຕັດສິນກ່ອນໝູ່ຕໍ່ການຢືນຍົງຄົງຕົວ ແລະການເຕີບໃຫຍ່ຂະຫຍາຍຕົວຂອງຊາດລາວເຮົາ. ຫາກເບິ່ງຄືນ ຂະບວນວິວັດປະຫວັດສາດແຫ່ງການເກີດຂຶ້ນ ແລະຂະຫຍາຍຕົວຂອງຊາດລາວເຮົາ ພວກເຮົາຈະເຫັນແຈ້ງທີ່ສຸດວ່າ ເວລາໃດສະໄໝໃດ ປະເທດຊາດມີຄວາມເປັນເອກະພາບ, ປະຊາຊົນມີຄວາມສາມັກຄີປອງດອງ, ຜຸ້ມລຸມກັນເປັນຈິດໜຶ່ງໃຈດຽວ ເວລານັ້ນ, ສະໄໝນັ້ນ ປະເທດລາວກໍມີຄວາມເຂັ້ມແຂງ, ຮຸ່ງເຮືອງແລະປະຊາຊົນກໍຢູ່ເຢັນເປັນສຸກ, ຕົວຢ່າງ ໃນສະໄໝຂອງພະເຈົ້າຟ້າງຸ່ມທີ່ໄດ້ທ້ອນໂຮມປະເທດຊາດໃຫ້ເປັນເອກະພາບ ແລະສ້າງເປັນປະເທດລ້ານຊ້າງນັ້ນ ປະເທດຊາດເຮົາໄດ້ຜ່ານ ໓໕໐ ກວ່າປີແຫ່ງຄວາມຮຸ່ງເຮືອງ ເຫລືອງເຫລື້ອມ ແລະ ໄດ້ຕີເອົາຊະນະການຮຸກຮານຂອງຕ່າງຊາດໃນສະຕະວັດທີ ໑໕, ໑໖ ແລະ ໑໗. ເວລາໃດ, ສະໄໝໃດປະເທດຊາດຫາກແຕກແຍກ, ປະຊາຊົນໃນຊາດມີຄວາມປໍລະປັກ, ຂັດແຍ້ງກັນເວລານັ້ນ ສະໄໝນັ້ນປະເທດຊາດກໍເສົ້າໝອງ ເປັນຕົ້ນສະໄໝ ອານາ

ຈັກລ້ານຊ້າງໃນຕົ້ນສະຕະວັດທີ ໑໘ ໄດ້ຕົກເຂົ້າສູ່ສະພາບແຕກແຍກ ນັ້ນ ກໍ່ໄດ້ຖືກສັກດິນາຕ່າງດ້າວຣຸກຣານ, ຢຶດຄອງ; ຊາດລາວ ໄດ້ຕົກເປັນຂ້ອຍຂ້າ, ປະຊາຊົນລາວ ໄດ້ຖືກກົດຂີ່ຂົ່ມເຫັງ, ຄວາມສີວິໄລຮຸ່ງເຮືອງ ໄດ້ຖືກທຳລາຍສູນເສັຽຢ່າງໜັກໜ່ວງ.

ມູນເຊື້ອສາມັກຄີປອງດອງເປັນຈຸດພິເສດອັນສຳຄັນຂອງການປະຕິວັດປະເທດເຮົາ, ທັງເປັນກຳລັງແຮງຕັດສິນໄຊຊະນະຂອງການປະຕິວັດຊາດ–ປະຊາທິປະໄຕໃນເມື່ອກ່ອນກໍ່ຄືໃນພາລະກິດປ່ຽນແປງໃໝ່ຂອງພວກເຮົາໃນປະຈຸບັນ. ພັກ ແລະລັດເຮົາ ຍາມໃດ ກໍ່ຖືຄວາມສາມັກຄີປອງດອງຄົນລາວທັງຊາດເປັນນະໂຍບາຍກົກແລະປະຕິບັດນະໂຍບາຍດັ່ງກ່າວຢ່າງສະເໝີຕົ້ນສະເໝີປາຍ ຕະຫຼອດມາ. ພວກເຮົາ ຖືວ່າ ປະຊາຊົນລາວທຸກເຜົ່າຊົນ ເປັນອ້າຍເອື້ອຍນ້ອງຮ່ວມເຮືອນດຽວກັນ, ຄົນລາວທຸກຄົນ ທັງຢູ່ພາຍໃນ ແລະ ຕ່າງປະເທດລ້ວນແຕ່ມີປູ່ພູ່ອັນດຽວກັນ. ກຳລັງແຫ່ງຄວາມສາມັກຄີປອງດອງຊາດຍັງເປັນປັດໄຈສຳຄັນທີ່ສຸດ ໃນພາລະກິດປົກປັກຮັກສາແລະສ້າງສາປະເທດຊາດ, ໃນການສ້າງຊີວິດອັນສົມບູນພູນສຸກ ແລະປະຕິບັດຄວາມສະເໝີພາບລະຫວ່າງເຜົ່າຢ່າງແທ້ຈິງ. ດ້ວຍເຫດນັ້ນ, ພວກຈັກກະພັດ ແລະອິດທິກຳລັງປະຕິການຈຶ່ງຊອກທຸກວິທີທາງ ເພື່ອແບ່ງແຍກ, ຍຸຍົງ, ສ້າງຄວາມອາຄາດບາດໝາງລະຫວ່າງ ເຜົ່າຕ່າງໆຫວັງເຮັດໃຫ້ພວກເຮົາອ່ອນເພັຽລົງແລ້ວອ່ອນຍອມຕໍ່ພວກເຂົາ. ຍອມ

ແນວນັ້ນ, ຍິ່ງກວ່າເວລາໃດໝົດ ພວກເຮົາຕ້ອງອອກແຮງ ເພີ່ມພູນຄຸ້ມສ້າງ ແລະຮັກສາຄວາມສາມັກຄີປອງດອງຊາດ ເໝືອນດັ່ງ ຮັກແກ້ວຕາຂອງຕົນ.

ນ) - ບັນຫາໜຶ່ງທີ່ມີຄວາມໝາຍຕັດສິນກວ່າໝູ່ ແມ່ນຕ້ອງອອກແຮງປັບປຸງກໍ່ສ້າງອຳນາດການປົກຄອງປະຊາຊົນທຸກຂັ້ນ, ກໍ່ສ້າງອົງການຈັດຕັ້ງມະຫາຊົນຂັ້ນຕ່າງໆ ໃຫ້ເຂັ້ມແຂງ, ໂດຍສະເພາະແມ່ນຕ້ອງປ່ຽນແປງໃໝ່ແລະເພີ່ມທະວີການນຳພາຂອງພັກ ເພື່ອຮັບປະກັນໄຊຊະນະຂອງການປ່ຽນແປງໃໝ່ຂອງພວກເຮົາ.

ອຳນາດການປົກຄອງ ແລະອົງການຈັດຕັ້ງມະຫາຊົນຂັ້ນຕ່າງໆ ດ້ານໜຶ່ງ ແມ່ນເຄື່ອງມື ເພື່ອປະຕິບັດສິດເປັນເຈົ້າຂອງປະເທດຊາດຂອງປະຊາຊົນຊັ້ນຄົນຕ່າງໆ, ດ້ານໜຶ່ງອີກ ກໍ່ເປັນຜູ້ຮັບໃຊ້ຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈຂອງປະຊາຊົນ. ໃນສະພາບການປະຈຸບັນ, ການປັບປຸງກໍ່ສ້າງອຳນາດການປົກຄອງ ແລະອົງການຈັດຕັ້ງມະຫາຊົນຂັ້ນຕ່າງໆ ເປັນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ເພື່ອເຮັດໃຫ້ການຈັດຕັ້ງດັ່ງກ່າວມີຄວາມປອດໃສ, ເຂັ້ມແຂງ, ມີຄວາມສັກສິດແລະມີການປ່ຽນແປງໃໝ່ຢ່າງແທ້ຈິງ, ກຳຈັດເອົາໄຂພະຍາດອາດຍາສິດ, ນາຍຊູ່ປະຊາຊົນ, ຜູກພັນຢ່າງສະໜິດແໜ້ນກັບປະຊາຊົນ, ປະຕິບັດແຜນນະໂຍບາຍຂອງພັກໃນການເສີມຂະຫຍາຍປະຊາທິປະໄຕ ໃນທຸກຂົງເຂດຂອງຊີວິດສັງຄົມ ຂອງປະເທດເຮົາໃຫ້ມີ

ພາກພື້ນຕົວຈິງ.

ຢາກດຳເນີນການປ່ຽນແປງໃໝ່ໃຫ້ໄດ້ຮັບໄຊຊະນະນັ້ນ, ສິ່ງສຳຄັນກວ່າໝູ່ແມ່ນຕ້ອງປ່ຽນແປງໃໝ່ ແລະ ເພີ່ມທະວີການນຳພາຂອງພັກ. ພັກຕ້ອງມີແນວທາງທີ່ຖືກຕ້ອງ, ມີຄວາມສາມັກຄີເປັນເອກະພາບ, ຕ້ອງພົວພັນຢ່າງເໜັ້ນແໜ້ນກັບປະຊາຊົນ, ສະມາຊິກພັກຕ້ອງເປັນແບບຢ່າງນຳໜ້າ ມະຫາຊົນໃນວຽກງານ, ໃນການອອກແຮງງານ, ໃນດ້ານທາດແທ້ ແລະ ແບບແຜນດຳລົງຊີວິດ. ພັກຕ້ອງເອົາໃຈໃສ່ຕໍ່ການຍົກສູງຄວາມຕື່ນຕົວ, ລະດັບຄວາມຮັບຮູ້ຂອງປະຊາຊົນ, ບຳລຸງສ້າງກຳລັງແຮງຂອງປະຊາຊົນ, ປະຕິບັດຄຳຂວັນທີ່ວ່າ: ເຮັດຫຍັງກໍ່ໃຫ້ປະຊາຊົນໄດ້ເປີກສາຫາລື, ປະຊາຊົນໄດ້ເຮັດ, ໄດ້ກວດກາ, ຕໍ່ສູ້ຢ່າງເດັດຂາດກັບໄພອາດຍາສິດທີ່ພວມຄົງຄ້າງໜັກໜ່ວງຢູ່ໃນພະນັກງານ, ສະມາຊິກ ເຊິ່ງມັນຈະກາຍເປັນອັນຕະລາຍຕໍ່ພັກ ທີ່ພວມກຳອຳນາດ.

ພັກປະຊາຊົນປະຕິວັດລາວ ແມ່ນພັກທີ່ມາຈາກປະຊາຊົນແລະເພື່ອປະຊາຊົນ, ແມ່ນພັກທີ່ໄດ້ປະກອບອາວຸດດ້ວຍການສົມທົບລັດທິຮັກຊາດອັນດູດດື່ມເຂົ້າກັບທິດສະດີທະຍາສາດຂອງລັດທິ ມາກ-ເລນິນ, ແມ່ນພັກທີ່ເກີດຂຶ້ນໃນຂະບວນວິວັດແຫ່ງການຕໍ່ສູ້ອັນຍືດເຍື້ອຍາວນານຂອງປະຊາຊົນບັນດາເຜົ່າ ເພື່ອຄວາມເປັນເອກະລາດ, ອິດສະ ລະພາບຂອງຊາດ, ເປັນພັກທີ່ໄດ້ຮ່ວມສຸກຮ່ວມທຸກ, ຮ່ວມເປັນ

ຮ່ວມຕາຍ, ພ້ອມກັບປະຊາຊົນຜ່ານຜ່າອຸປະສັກແລະຄວາມຫຍຸ້ງຍາກນາໆ ປະການມາແລ້ວບໍ່ຈັກວ່າເທົ່າໃດ. ຍ້ອນເຫດນັ້ນເອງ, ນັບແຕ່ໄດ້ຮັບການສ້າງຕັ້ງຂຶ້ນຈົນມາເຖິງປະຈຸບັນ, ພັກ ຍາມໃດກໍ່ໄດ້ ຮັບການສະໜັບສະໜູນ ແລະໄດ້ຮັບຄວາມເອົາໃຈໃສ່ກໍ່ສ້າງ ແລະປົກປັກຮັກສາຢ່າງສຸດອົກສຸດໃຈ ຈາກປະຊາຊົນ, ປະຊາຊົນລາວເຜົ່າຕ່າງຕ່າງຮັບຮູ້ບົດບາດນຳພາຂອງພັກ ແລະຈົດຈຳສະເໝີບຸນຄຸນຂອງພັກ, ຢາກໃຫ້ພັກເຕີບໃຫຍ່ເຂັ້ມແຂງ ແລະນຳພາປະເທດຊາດຕໍ່ໄປ ດ້ວຍຄວາມສະຫຼາດສ່ອງໃສ. ເຂົາເຈົ້າ ກໍ່ຮັບຮູ້ວ່າ ພັກການ ເມືອງອື່ນທີ່ມີໃນເມື່ອກ່ອນນັ້ນ ແມ່ນໄດ້ຖືກກົງລໍ້ປະຫວັດສາດປັດເຂ່ຍໃຫ້ຕົກໄປແລ້ວ ແລະກໍ່ເຫັນວ່າ ບໍ່ມີຄວາມຈຳເປັນອັນໃດເລີຍ ທີ່ຈະໃຫ້ມີພັກການເມືອງອື່ນອີກ.

ເປັນໜ້າເສຍດາຍວ່າ, ນັບແຕ່ມີສະຖາປະນາ ສາທາລະນະລັດປະຊາທິປະໄຕປະຊາຊົນລາວມາເຖິງປະຈຸບັນນີ້ ໄດ້ມີພະນັກງານ, ສະມາຊິກພັກຈຳນວນໜ້ອຍບໍ່ສາມາດຮັກສາທາດແທ້ປະຕິວັດຂອງຕົນໄດ້, ຂາດການປູກລະດົມມະຫາຊົນ ແລະ ຟັງຄວາມຄິດຄວາມເຫັນຂອງມະຫາຊົນໃນຊັ້ນຄົນຕ່າງໆ ທີ່ປະກອບໃຫ້ແກ່ວຽກງານລວມຂອງຊາດ. ພະຍາດອາດຍາສິດ, ຫ່າງເຫີນມະຫາຊົນຍັງພັກພວງ, ຍິ່ງກວ່ານັ້ນ ມີຫຼາຍຄົນຍັງສໍ້ລາດບັງຫຼວງ, ຂົ່ມຂູ່ ມະຫາຊົນ ເຮັດໃຫ້ມີຜົນສະທ້ອນບໍ່ດີຕໍ່ມູນເຊື້ອສາມັກຄີເປັນເອກະພາບລະຫວ່າງ ພັກ

ກັບປະຊາຊົນ. ແລະຕ້ອງເນັ້ນວ່າ ໃນຂະນະທີ່ມີສະພາບການຄືແນວ
ນັ້ນປະຊາຊົນບັນດາເຜົ່າກໍ່ຍັງຮັກສາໄດ້ສິ່ງທີ່ປະເສີດທີ່ສຸດຂອງຕົນ,
ນັ້ນຄື ຄວາມເປັນຫ່ວງເປັນໃຍໃນການສືບຕໍ່ກໍ່ສ້າງພັກ. ເພາະວ່າ
ປະຊາຊົນເຮົາໄດ້ມີຄວາມຮັບຮູ້ບັນຫາໜຶ່ງທີ່ກາຍເປັນກົດເກນແລ້ວຄື:
ຢາກໃຫ້ການປະຕິວັດສຳເລັດໄດ້ກໍ່ຕໍ່ເມື່ອ ມີຄວາມເປັນຫ່ວງເປັນ
ໃຍ ສ້າງພັກນຳພາຂອງຕົນໃຫ້ເຂັ້ມແຂງຢ່າງແທ້ຈິງເທົ່ານັ້ນ.

(໔)- <u>ເຮັດສຸດຄວາມສາມາດຂອງຕົນເພື່ອປະກອບສ່ວນເຂົ້າ
ໃນການເພີ່ມທະວີຄວາມສາມັກຄີສາກົນ</u>.

ການເພີ່ມທະວີຄວາມສາມັກຄີສາກົນ, ສົມທົບຢ່າງສະໜິດແໜ້ນ
ລະຫວ່າງກຳລັງແຮງຂອງຊາດກັບກຳລັງແຮງຂອງຍຸກສະໄໝ ເປັນ
ບົດຮຽນແລະກໍ່ເປັນມູນເຊື້ອອັນປະເສີດຂອງການປະຕິວັດເຮົາ. ໃນ
ໄລຍະທີ່ຜ່ານມາ, ພວກເຮົາ ໄດ້ຍາດແຍ່ງເອົາການ ສະໜັບສະໜູນ
ແລະການຊ່ວຍເຫຼືອອັນໃຫຍ່ຫຼວງ ຈາກບັນດາປະເທດອ້າຍນ້ອງ
ແລະເພື່ອນມິດໃນໂລກ, ສ້າງເງື່ອນໄຂອັນສະດວກໃຫ້ແກ່ການປະຕິ
ວັດເຮົາຕະຫຼອດມາ, ພ້ອມກັນນັ້ນພວກເຮົາກໍ່ໄດ້ປະກອບສ່ວນຢ່າງ
ສົມກຽດຂອງຕົນ ເຂົ້າໃນພາລະກິດປະຕິວັດຂອງພາກພື້ນ ແລະຂອງ
ໂລກ. ຕໍ່ໜ້າກົນອຸບາຍ, ເລ່ຫຼ່ຽມອັນໂຫດຫ້ຽມຂອງພວກຈັກກະພັດ,
ອິດທິກຳລັງປະຕິການ ແລະພວກສວຍໂອກາດທີ່ໄດ້ອອກແຮງ ແບ່ງ
ແຍກບັນດາກຳລັງປະຕິວັດຢູ່ໃນໂລກ, ແລະພວມເພີ່ມທະວີພັນທະມິດ

ເພື່ອມ້າງເພທຳລາຍການປະຕິວັດ, ປິດລ້ອມໂດດດ່ຽວ ບັນດາປະເທດສັງຄົມນິຍົມໃນປະຈຸບັນນີ້, ພວກເຮົາ ຕ້ອງຮັກສາ ແລະເພີ່ມທະວີຄວາມສາມັກຄີສາກົນ. ຈຸດໝາຍສຳຄັນອັນໜຶ່ງ ໃນພາລະກິດປ່ຽນແປງໃໝ່ຂອງພວກເຮົາແມ່ນ ຕ້ອງເຮັດໃຫ້ການພົວພັນ ສາມັກຄີຮ່ວມມືສາກົນມີປະສິດທິຜົນ ແລະ ເຮັດໃຫ້ພັນທະພາບບັນດາປະເທດອ້າຍນ້ອງຢູ່ໃນພາກພື້ນໜັກແໜ້ນກວ່າເກົ່າ, ເພື່ອຜົນປະໂຫຍດ ຂອງແຕ່ລະປະເທດ ແລະຂອງທົ່ວອົງຄະນາຍາດຢູ່ໃນພາກພື້ນ. ພວກເຮົາຕ້ອງເຫັນແຈ້ງວ່າ ການເພີ່ມມິດ-ຫລຸດຜ່ອນສັດຕູນັ້ນ ກໍ່ເປັນຄວາມຮຽກຮ້ອງຕ້ອງການອັນສຳຄັນໃນພາລະກິດປ່ຽນແປງໃໝ່ ຂອງພວກເຮົາ.

ບັນດາທ່ານ ທີ່ນັບຖື,

ແຜນນະໂຍບາຍແຫ່ງການປ່ຽນແປງໃໝ່ຂອງພັກແລະລັດເຮົາ ແມ່ນພາລະກິດອັນຍາວນານ, ຫຍຸ້ງຍາກ ແລະສັບສົນ, ແນວທາງປ່ຽນແປງໃໝ່ຂອງພັກເຮົາແມ່ນຖືກຕ້ອງແລ້ວ ແຕ່ ການຫັນແນວທາງດັ່ງກ່າວເປັນອັນລະອຽດຢູ່ໃນທຸກຂົງເຂດຂອງຊີວິດສັງຄົມ, ການເຮັດໃຫ້ບັນດາຂະແໜງການແລະຂັ້ນຕ່າງໆ ເຊື່ອມຊຶມກົດການຊີ້ນຳ ປະຕິບັດຍັງມີຄວາມຫຍຸ້ງຍາກຫລາຍປະການ, ມັນເລັ່ງທວງ ໃຫ້ທົ່ວພັກ ແລະທົ່ວປວງຊົນເຮົາ ຕ້ອງເສີມຂະຫຍາຍກຳລັງຄວາມສາມາດແລະ

ຫົວຄິດປະດິດສ້າງຢ່າງສຸດຂີດ, ຕັດສິນໃຈນຳເອົາພາລະກິດ ປ່ຽນແປງໃໝ່ກ້າວຂຶ້ນຍາດເອົາໄຊຊະນະໃໝ່.

ບັນດາທ່ານ ຜູ້ແທນທີ່ມີກຽດ,

ໃນບໍ່ດົນມານີ້ ກອງປະຊຸມຄັ້ງທີ່ ໘ ຂອງສູນກາງ ໄດ້ກຳນົດທິດທາງໜ້າທີ່ລວມໃນປີ ໑໙໘໐ ຄື: ເສີມຂະຫຍາຍມູນເຊື້ອຮັກຊາດແລະສະຕິລະວັງຕົວປະຕິວັດ, ປັບປຸງກ້ອນກຳລັງແຫ່ງຄວາມສາມັກຄີປອງດອງຂອງປະຊາຊົນລາວບັນດາເຜົ່າທົ່ວທັງປະເທດ, ຢຶດໝັ້ນໃນພາລະກິດປ່ຽນແປງໃໝ່ຢ່າງແໜ້ນໜຽວ ບົນພື້ນຖານ ຝ ຫຼັກການປະຕິວັດຂອງພັກ, ສູ້ຊົນເຮັດສຳເລັດບັນດາໜ້າທີ່ພື້ນຖານ ທີ່ກອງປະຊຸມໃຫຍ່ ຄັ້ງທີ່ III ຂອງພັກໄດ້ວາງອອກ, ເຊີດຊູ ແລະ ເສີມຂະຫຍາຍປະຊາທິປະໄຕ, ສ້າງຄວາມເປັນເອກະພາບໃນລະດັບສູງແລະການພົວພັນສະໜິດແໜ້ນລະຫວ່າງພັກ ກັບປະຊາຊົນ, ຟັບປຸງຄວາມເຊື່ອໝັ້ນ, ຄວາມຫ້າວຫັນຂອງພະນັກງານສະມາຊິກພັກ ແລະ ປະຊາຊົນເຮົາ ຕັດສິນໃຈຜ່ານຜ່າຄວາມຫຍຸ້ງຍາກ ແລະ ການທົດສອບນາໆ ປະການໃນສະພາບການໃໝ່ ສືບຕໍ່ກ້າວຂຶ້ນຢ່າງໜັກແໜ້ນ ເພື່ອສ້າງຜົນງານຂ່ຳນັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ່ IV ຂອງພັກ.

ເພື່ອປະຕິບັດທິດທາງໜ້າທີ່ລວມດັ່ງກ່າວນັ້ນ ໃຫ້ໄດ້ຮັບຜົນ, ພວກເຮົາຕ້ອງສຸມທຸກຄວາມບາກບັ່ນພະຍາຍາມ ເພື່ອປະຕິບັດບັນດາ

ໜ້າທີ່ຕົ້ນຕໍສຳລັບປີ ໑໙໙໐ ດັ່ງຕໍ່ໄປນີ້:

໑)- ຊຸກຍູ້ການຜະລິດຢ່າງແຂງແຮງ ເປັນຕົ້ນແມ່ນການຜະລິດກະສິກຳ-ປ່າໄມ້ໃຫ້ກາຍເປັນການຜະລິດສິນຄ້າ ໂດຍສຸມໃສ່ເຂດຈຸດໜັກຕ່າງໆ, ຂະຫຍາຍການບໍລິການ. ນອກຈາກການອັນຕັ້ງໜ້າເພື່ອແກ້ໄຂຄວາມຫຍຸ້ງຍາກໃນຂົງເຂດຈໍລະຈອນແຈກຢາຍ ( ການເງິນ, ທະນາຄານ ແລະການຄ້າ), ເປີດກວ້າງການພົວພັນ ເສດຖະກິດກັບຕ່າງປະເທດຢ່າງມີປະສິດທິຜົນ, ສືບຕໍ່ບູລະນະກົນໄກຄຸ້ມຄອງເສດຖະກິດໃໝ່ອີກກ້າວໜຶ່ງແລະຫັນໄປສູ່ການໄລ່ລຽງທຸລະກິດຢ່າງຂາດຕົວ, ຍົກສູງປະສິດທິຜົນຂອງການຜະລິດທຸລະກິດ ເນັ້ນໃສ່ຊຸກຍູ້ການຜະລິດໃຫ້ຂະຫຍາຍຕົວ, ຕອບສະໜອງຄວາມຕ້ອງການອັນຈຳເປັນຂອງປະຊາຊົນ.

໒)- ເອົານະໂຍບາຍແລະການເຄື່ອນໄຫວເສດຖະກິດຕິດພັນກັບນະໂຍບາຍ ແລະການເຄື່ອນໄຫວທາງດ້ານສັງຄົມ. ເອົາໃຈໃສ່ຢ່າງຕັ້ງໜ້າແກ້ໄຂຄວາມຫຍຸ້ງຍາກຈຳນວນໜຶ່ງໃນຊີວິດການເປັນຢູ່ທາງດ້ານວັດຖຸ ແລະວັດທະນະທຳຂອງປະຊາຊົນ ເປັນຕົ້ນແມ່ນໃນເຂດເຜົ່າຊົນຕ່າງໆ, ຂອງພະນັກງານລັດຖະກອນໃນຂົງເຂດບໍລິຫານວິຊາການ, ທະຫານ, ຕຳຫຼວດ, ຜູ້ທີ່ອອກກິນເບັ້ຍບຳນານ, ຄອບຄົວຜູ້ເສຍສະຫຼະຊີວິດເພື່ອຊາດ, ຜູ້ເສຍອົງຄະຍ້ອນການເຄື່ອນໄຫວປະຕິວັດ. ສະກັດກັ້ນ ແລະກຳຈັດປະກົດການຫຍໍ້ທໍ້ ທີ່ພວມເກີດຂຶ້ນຢູ່

ໃນສັງຄົມ, ຟື້ນຟູ ແລະຍົກສູງຄຸນນະພາບຂອງວຽກງານສຶກສາ, ສາທາລະນະສຸກ, ວັດທະນະທຳ ແລະຂ່າວສານ.

໓)- ເພີ່ມທະວີ ແລະຟື້ນຟູວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບທົ່ວປວງຊົນ, ເອົາໃຈໃສ່ວຽກງານທະຫານທ້ອງຖິ່ນ ແລະວຽກງານປ້ອງກັນຄວາມສະຫງົບຂອງປະຊາຊົນ ໃຫ້ດີກວ່າເກົ່າ, ປະສານສົມທົບຢ່າງໜຽວແໜ້ນລະຫວ່າງ ເສດຖະກິດ-ສັງຄົມ ກັບການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກຽມພ້ອມທັບມ້າງທຸກກົນອຸບາຍຫັນປ່ຽນໂດຍສັນຕິ, ທຳລາຍມ້າງເພກການກະບົດໂຄ່ນລົ້ມລະບອບໃໝ່ຂອງສັດຕູ ແລະພວກຄົນບໍ່ດີ, ປົກປັກຮັກສາໝາກ ຜົນຂອງການປະຕິວັດແລະການອອກແຮງງານສ້າງສາພັດທະນາປະເທດຊາດໃນສັນຕິພາບຂອງປະຊາຊົນເຮົາ.

໔)- ສືບຕໍ່ຫັນທຸກການເຄື່ອນໄຫວລົງສູ່ຮາກຖານ, ຂຶ້ນໄປເຂດພູດອຍ ແລະລົງສູ່ຊົນນະບົດຢ່າງແຂງແຮງ, ສຶກສາອົບຮົມ, ປຸກລະດົມນ້ຳໃຈຮັກຊາດ, ເປັນເຈົ້າປະເທດຊາດຂອງປະຊາຊົນເຊີດຊູເສີມຂະຫຍາຍປະຊາທິປະໄຕໃນທົ່ວສັງຄົມ, ຟື້ນຟູຄວາມສາມັກຄີປອງດອງຂອງປະຊາຊົນເຜົ່າຕ່າງໆ, ຟື້ນຟູລະບົບອຳນາດການປົກຄອງປະຊາທິປະໄຕປະຊາຊົນແຕ່ຂັ້ນຮາກຖານຂຶ້ນມາ; ສ້າງແຕ່ລະບ້ານແຕ່ລະຫົວໜ່ວຍເສດຖະກິດ, ວັດທະນະທຳໃຫ້ກາຍເປັນປ້ອມໜັ້ນຂອງລະບອບປະຊາທິປະໄຕປະຊາຊົນ.

໕)- ຟື້ນຟູບູລະນະກິຈການຈັດຕັ້ງໃຫ້ສຳເລັດ ແລະສົມບູນ ໂດຍພື້ນຖານ, ປ່ຽນແປງໃໝ່ລະບົບແລະວິທີເຮັດວຽກຂອງຂັ້ນຕ່າງໆ, ຂະແໜງການຕ່າງໆ ແລະການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ; ຟື້ນຟູ ແລະຍົກສູງຄຸນປະໂຫຍດຂອງວຽກງານແນວໂຮມ. ເດັດດ່ຽວຕ້ານປະກົດການອາດຍາສິດ, ສໍ້ລາດບັງຫຼວງ, ຮັບສິນບົນ ແລະການກະທຳ ເພື່ອເພີ່ມປະໂຫຍດສ່ວນຕົວເບຍ ເຊື່ອມຊານຂອງພະນັກງານ, ລັດຖະກອນທຸກຂັ້ນ, ລົງໂທດຢ່າງທັນການຕໍ່ຜູ້ກະທຳຜິດ, ຜ່າຜືນກົດໝາຍ ແລະຂໍ້ກຳນົດກົດລະບຽບຂອງລັດ ແລະອຳນາດການປົກຄອງ.

໖)- ເປີດກ້ວາງການພົວພັນ ແລະການຮ່ວມມືກັບຕ່າງປະເທດ, ເພີ່ມທະວີຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານກັບຫວຽດນາມ ແລະກຳປູເຈຍ, ສາມັກຄີ ແລະຮ່ວມມືຮອບດ້ານກັບສະຫະພາບໂຊວຽດ, ພົວພັນຮ່ວມມືກັບບັນດາປະເທດອ້າຍນ້ອງແລະເພື່ອນມິດໃນທົ່ວໂລກ, ຍາດແຍ່ງເອົາທຸກເງື່ອນໄຂສະດວກທາງສາກົນ ເພື່ອສຳເລັດພາລະກິດປົກປັກຮັກສາ ແລະສ້າງສາປະເທດຊາດ.

ເພື່ອປະຕິບັດໜ້າທີ່ຕົ້ນຕໍດັ່ງກ່າວນັ້ນ ໃຫ້ປະກົດຜົນເປັນ ຈິງ ພວກເຮົາຕ້ອງເອົາໃຈໃສ່ປະຕິບັດບາງວຽກງານອັນຮີບດ່ວນ ໃນປີ ໑໙໘໐ ດັ່ງນີ້:

໑)- <u>ແກ້ໄຂບາງບັນຫາທາງດ້ານເສດຖະກິດ-ສັງຄົມ, ກ່ອນ</u>

ອັນພົດເດັ່ນຊຸກຍູ້ການຜະລິດຢ່າງແຂງແຮງ, ປັບປຸງຊີວິດການເປັນຢູ່ທາງດ້ານວັດຖຸ ແລະວັດທະນະທຳຂອງປະຊາຊົນ ລະອຽດຄື:

ດ້ານການຜະລິດກະສິກຳ, ພວກເຮົາຍັງຖືເອົາການກະສິກຳເປັນສະໜາມຮົບອັນດັບໜຶ່ງ ເຊິ່ງຈະຕ້ອງໄດ້ສຸມທຶນຮອນ, ວັດຖຸເຕັກນິກ ແລະພະນັກງານເຂົ້າໃສ່ ເພື່ອຊຸກຍູ້ ການຜະລິດກະສິກຳຮອບດ້ານ, ເປີດກວ້າງການເຮັດກະເສດສຸມ, ປະຕິບັດກົນໄກໃໝ່ໃນກະສິກຳຢ່າງກວ້າງຂວາງທົ່ວໄປ, ຕ້ອງປະລຸສະຫະກອນແບບເກົ່າ, ຈັດຕັ້ງປະຕິບັດການມອບໝົ້າຜະລິດ, ດຸ່ນດ່ຽງລະຫວ່າງແຮງງານກັບທີ່ດິນ, ຊ່ວຍສ້າງແຜນການຂອງແຕ່ລະຄອບຄົວຊາວກະສິກອນ, ຈັດຕັ້ງການບໍລິການເປັນຢ່າງດີ ( ດ້ານເຕັກນິກ, ແນວພັນ, ຝຸ່ນ...), ດ້ວຍການເຂົ້າຮ່ວມຂອງທຸກພາກສ່ວນເສດຖະກິດ, ເອົາການຜະລິດຕິດພັນກັບຕະຫລາດ ແລະການປຸງແຕ່ງ. ປະຕິບັດການເກັບຊື້ຜະລິດຕະພັນນຳຊາວກະສິກອນຕາມລາຄາປະກິດຕິ ແລະເຫັນດີເຫັນພ້ອມນຳກັນ ໂດຍບໍ່ມີການກົດໜີບ ຫລືບັງຄັບໃດໆ. ສືບຕໍ່ຊຸກຍູ້ວຽກງານລ້ຽງສັດ, ໂດຍຖືເອົາການລ້ຽງສັດຂອງປະຊາຊົນເປັນຕົ້ນຕໍ, ສົ່ງເສີມການປູກພືດທາດແປ້ງ, ພືດອຸດສາຫະກຳໄລຍະສັ້ນ ແລະໄລຍະຍາວ. ຟື້ນຟູ ແລະນຳໃຊ້ລະບົບຊົນລະປະທານ ທີ່ມີຢູ່ແລ້ວ ໃຫ້ເຕັມຄວາມສາມາດ, ນຳໃຊ້ກົນຈັກໃນການກະສິກຳເທື່ອລະກ້າວເປັນຕົ້ນແມ່ນ ກົນຈັກຂະໜາດນ້ອຍ, ອອກກົດໝາຍທີ່ດິນ, ກຳນົດສິດຕໍ່ກຳ

ມະສິດ ແລະສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມແຕ່ລະເປົ້າໝາຍ ໂດຍມີການຄົ້ນຄວ້າເຮັດທົດລອງຢ່າງຄັກແນ່.

<u>ດ້ານປ່າໄມ້</u>, ຕ້ອງສູ້ຊົນປະຕິບັດມະຕິຂອງກອງປະຊຸມປ່າໄມ້ທົ່ວປະເທດຄັ້ງທີ I ໃຫ້ເປັນຈິງ, ເພ່ງຂັ້ນຄຸ້ມຄອງປ່າໄມ້ ໃຫ້ລະອຽດ, ແນະນຳ ແລະ ຈັດຕັ້ງປະຕິບັດດຳລັດຂອງສະພາລັດຖະມົນຕີ ແລະບັນດາຂໍ້ກຳນົດກ່ຽວກັບການຄຸ້ມຄອງປົກປັກຮັກສາແລະຂຸດຄົ້ນປ່າໄມ້ເປັນຢ່າງດີ, ຈັດຕັ້ງຄຸ້ມຄອງຂອດປຸ່ງແຕ່ງແລະການເຮັດຂາອອກໄມ້, ຜະລິດຕະພັນໄມ້ ແລະເຄື່ອງປ່າຂອງດົງຢ່າງເຂັ້ມງວດ ເພື່ອສ້າງແຫຼ່ງລາຍຮັບໃຫ້ງົບປະມານ.

<u>ດ້ານອຸດສາຫະກຳ ແລະຫັດຖະກຳ</u>, ສືບຕໍ່ສັບຊ້ອນ ແລະປັບປຸງໂຮງຈັກໂຮງງານຂອງລັດຄືນໃໝ່ຕາມກົນໄກໃໝ່, ຍົກສູງປະສິດທິພາບຂອງການຜະລິດ. ຫົວໜ່ວຍໃດທີ່ເຫັນວ່າ ການຜະລິດທຸລະກິດບໍ່ມີປະສິດທິຜົນ ຫຼືມີປະສິດທິຜົນຕ່ຳຕ້ອງຄົ້ນຄວ້າພິຈາລະນາເດັດດ່ຽວຫັນໄປສູ່ຮູບການກຳມະສິດອື່ນດ້ວຍການໃຫ້ບຸກຄົນ, ລວມໝູ່ເຊົ່າ ຫຼືຂາຍອອກຢ່າງຂາດຕົວ. ຊຸກຍູ້ ແລະ ສົ່ງເສີມການຜະລິດພາຍໃນປະເທດເປັນຕົ້ນແມ່ນ ອຸດສາຫະກຳເບົາ, ຫັດຖະກຳທີ່ຜະລິດສິນຄ້າເພື່ອໃຊ້ສອຍພາຍໃນປະເທດ ແລະ ເພື່ອຂາອອກ. ຄົ້ນຄວ້າວາງໂຄງການທີ່ມີຈຸດໝາຍກ່ຽວກັບການຜະລິດສິນຄ້າໃຊ້ສອຍ ແລະສິນຄ້າຂາອອກ, ເພີ່ມປະລິມານການຂຸດຄົ້ນແຮ່ທາດອື່ນອີກຕາມເງື່ອນໄຂ.

ດ້ານຄົມນາຄົມຂົນສົ່ງ, ໄປສະນີ ແລະກໍ່ສ້າງ, ເນັ້ນສືບຕໍ່ບັນດາໂຄງການຍົກລະດັບ, ສ້ອມແປງ ແລະກໍ່ສ້າງເສັ້ນທາງສາຍສຳຄັນຕ່າງໆ. ປະຕິບັດທິດນຳທີ່ວ່າ " ລັດ ແລະປະຊາຊົນພ້ອມກັນເຮັດໃນການປົກປັກຮັກສາ, ປ່ອມແປງແລະເປີດກວ້າງຕາໜ່າງຄົມມະນາຄົມຢູ່ຊົນນະບົດ. ຂະຫຍາຍຕານ່າງແລະຍົກສູງຄຸນນະພາບຂອງວຽກງານໄປສະນີໃຫ້ໄດ້ດີ. ສຳລັບວຽກງານກໍ່ສ້າງພື້ນຖານນັ້ນຄວນສຸມໃສ່ບັນດາໂຄງການຈຸດສຸມ ສະເພາະໜ້າ ແລະຍາວນານ ເພື່ອຮັບໃຊ້ການຜະລິດ, ການຈໍລະຈອນ ແລະຊີວິດການເປັນຢູ່ຂອງປະຊາຊົນ, ສ່ວນໂຄງການທີ່ບໍ່ສຳຄັນ ແລະບໍ່ທັນຈຳເປັນແທ້ນັ້ນຕ້ອງໂຈະໄວ້ກ່ອນ.

ວຽກງານຈໍລະຈອນແຈກຢາຍ, ເປັນວຽກງານທີ່ຫຍຸ້ງຍາກ ແລະກະທົບໂດຍກົງຕໍ່ສະພາບເສດຖະກິດແລະຊີວິດການເປັນຢູ່ ເຊິ່ງຕ້ອງເອົາໃຈໃສ່ແກ້ໄຂເປັນຢ່າງດີ. ພວກເຮົາຕ້ອງສືບຕໍ່ປະຕິບັດການຈໍລະຈອນແບບເສລີຖືກກົດໝາຍ ເພາະມັນສອດຄ່ອງກັບໂຄງປະກອບເສດຖະກິດທີ່ມີຫລາຍພາກສ່ວນ ແລະຖືກກັບຄວາມປາຖະໜາຂອງປະຊາຊົນຊັ້ນຄົນຕ່າງໆ, ພວກເຮົາຕ້ອງໝູນທຶນຂອງວຽກງານນີ້ ໄປຮັບໃຊ້ ແລະກະຕຸກຊຸກຍູ້ການຜະລິດຢ່າງແຂງແຮງ, ເນໃສ່ເປີດກວ້າງຕະຫລາດ, ເຮັດໃຫ້ຕະຫລາດພາຍໃນປະເທດຕິດພັນກັບຕະຫລາດຕ່າງປະເທດ, ເຮັດໃຫ້ລາຄາສິນຄ້າໝັ້ນທ່ຽງ ແລະຊີວິດການເປັນຢູ່

ເປັນປົກກະຕິ.

ຢາກເຮັດວຽກງານຈໍລະຈອນແຈກຢາຍໄດ້ດີ ກໍ່ຕ້ອງນຳໃຊ້ ແລະຄຸ້ມຄອງການເຄື່ອນໄຫວຜະລິດ, ທຸລະກິດ ຂອງພາກສ່ວນເສດຖະກິດຕ່າງໆ ເປັນຢ່າງດີ. ທັງການເຄື່ອນໄຫວດ້ານການເງິນ, ທະນາຄານ, ການຄ້າໄປສູ່ກົນໄກໃໝ່ຢ່າງແທ້ຈິງ. ນອກນີ້ການທີ່ຖືກຕ້ອງ ເພື່ອເກັບລາຍຮັບໃຫ້ໄດ້ໝົດ ເພື່ອເພີ່ມແຫຼ່ງລາຍຮັບພາຍໃນປະເທດຂື້ນ, ຍາດແຍ່ງ ແລະນຳໃຊ້ທຶນພາຍນອກໃຫ້ດີ, ລະດົມແຫຼ່ງເງິນປະຢັດຂອງປະຊາຊົນ, ປະຕິບັດນະໂຍບາຍປະຢັດມັດທະຍັດຢ່າງເຂັ້ມງວດ, ປະກາດນະໂຍບາຍປະຢັດເປັນນະໂຍບາຍແຫ່ງຊາດທີ່ສຳຄັນທີ່ສຸດອັນໜຶ່ງ.

- ປັບປຸງບູລະນະກົນໄກຄຸ້ມຄອງເສດຖະກິດໃໝ່ຕື່ມອີກກ້າວໜຶ່ງ. ຜ່ານການປະຕິບັດກົນໄກໃໝ່ໃນ ໔-໕ ປີມານີ້ ພວກເຮົາກໍ່ເຫັນໄດ້ຢ່າງຈະແຈ້ງ ຄຸນປະໂຫຍດອັນຕັ້ງໜ້າຂອງມັນ. ດັ່ງນັ້ນພວກເຮົາຕ້ອງສືບຕໍ່ສ້າງເສີມ, ນຳໃຊ້ ແລະບູລະນະໃຫ້ມັນຄົບຊຸດ ແລະຄ່ອງຕົວກວ່າເກົ່າ.

ປັບປຸງບູລະນະກົນໄກໃໝ່ໝາຍເຖິງປັບປຸງບູລະນະກົນໄກການນຳໃຊ້ການພົວພັນສິນຄ້າ- ເງິນຕາ ແລະທຸກພາກສ່ວນເສດຖະກິດຢ່າງແທ້ຈິງ ແລະຍາວນານ ໂດຍສອດຄ່ອງກັບນະໂຍບາຍໂຄງປະກອບເສດຖະກິດແລະຈຸດພິເສດທາງດ້ານເສດຖະກິດ-ສັງຄົມຂອງປະເທດ

ເຮົາ. ປະຕິບັດກົນໄກໃໝ່ໃນເສດຖະກິດລັດຈະປະຕິບັດພາລະບົດບາດບໍລິຫານ, ອຳນວຍຄວບຄຸມເສດຖະກິດແລະກຳດ້ານມະຫາພາກເປັນຕົ້ນຕໍ, ລັດຕ້ອງກຳໃຫ້ດີການເງິນ, ທະນາຄານ, ການຄ້າຍົກ-ຂາຍຍົກ ແລະຈະຮັກສາພຽງແຕ່ຂະແໜງການຍຸດທະສາດ, ສຳຄັນເທົ່ານັ້ນໄວ້ໃນຄຸ້ມຄອງຂອງຕົນ ນອກນັ້ນຈະໃຫ້ເປັນກຳມະສິດຂອງພາກສ່ວນເສດຖະກິດອື່ນ. ເພື່ອປະຕິບັດຕາມກົນໄກໃໝ່ດັ່ງກ່າວນັ້ນ ພວກເຮົາຕ້ອງສ້າງລະບົບກົດໝາຍຄຸ້ມຄອງມະຫາພາກໃຫ້ສຳເລັດໂດຍພື້ນຖານແລະຄົບຊຸດ ເພື່ອເປັນບ່ອນອີງໃນການອຳນວຍຄວບຄຸມການຜະລິດທຸລະກິດ, ເປັນເຄື່ອງມືດັດສົມຜົນປະໂຫຍດລະຫວ່າງຊັ້ນຄົນຕ່າງໆດ້ວຍກັນ, ລະຫວ່າງລັດກັບລວມໝູ່ ແລະກັບບຸກຄົນ, ຊັ້ນຄົນຕ່າງໆ, ເຮັດໃຫ້ມີຄວາມຍຸຕິທຳໃນສັງຄົມ.

ການປັບປຸງບູລະນະກົນໄກຄຸ້ມຄອງໃໝ່ ເລັ່ງທວງໃຫ້ມີການແບ່ງຂັ້ນຄຸ້ມຄອງຢ່າງລະອຽດລະຫວ່າງຂັ້ນຕ່າງໆ ແລະຕ້ອງມີຜູ້ຮັບຜິດຊອບ ແລະອຳນວຍຄວບຄຸມຕົວຈິງ. ພວກເຮົາຕ້ອງບຳລຸງ ສ້າງພະນັກງານຄຸ້ມຄອງຕາມຈິນຕະນາການໃໝ່ທີ່ຮູ້ກົດເກນຕະຫລາດແລະການພົວພັນສິນຄ້າ-ເງິນຕາເປັນຢ່າງດີ. ຄຽງຄູ່ກັນນັ້ນກໍຕ້ອງຍົກສູງສິດເປັນເຈົ້າ ແລະຄວາມສາມາດຄຸ້ມຄອງຈຸລະພາກຂອງບັນດາຫົວໜ່ວຍຜະລິດທຸລະກິດຢ່າງແທ້ຈິງ.

- <u>ການສຶກສາ, ວັດທະນະທຳ ແລະສັງຄົມ</u> <u>ເປັນວຽກ</u>

ໜຶ່ງ ທີ່ມີຄວາມສຳຄັນເປັນພິເສດ, ຈາກພຶດຕິກຳ ແລະບົດຮຽນຂອງຕົນ ແລະຂອງຫລາຍໆ ປະເທດໃນໂລກ ພວກເຮົາຍິ່ງເຫັນແຈ້ງວ່າ ຫາກບໍ່ເອົາໃຈໃສ່ຕໍ່ວຽກງານສຶກສາ, ວັດທະນະທຳແລະສັງຄົມແລ້ວ ພວກເຮົາຈະບໍ່ສາມາດພາປະເທດຊາດກ້າວຂຶ້ນຢ່າງໜັກແໜ້ນໄດ້ ໃນອະນາຄົດ. ພວກເຮົາຢືນຢັນອີກເທື່ອໜຶ່ງວ່າ ແຜນນະໂຍບາຍ "ເອົາການສຶກສາໄປກ່ອນກ້າວໜຶ່ງ" ທີ່ພັກເຮົາວາງອອກນັ້ນເປັນຖືກຕ້ອງທີ່ສຸດ. ພວກເຮົາຕ້ອງກ້າລົງທຶນໃສ່ການສ້າງຄົນ, ເພາະການລົງທຶນດັ່ງກ່າວຈະນຳເອົາກຳໄລມະຫາສານມາໃຫ້ພວກເຮົາໃນອະນາຄົດ. ຕ້ອງສືບຕໍ່ຜັນຂະຫຍາຍໂຄງການປະຕິຮູບການສຶກສາ, ສ້າງແຜນການລະອຽດກ່ຽວກັບການພັດທະນາ ແລະຍົກສູງຄຸນນະພາບການສຶກສາ, ປັບປຸງລະບົບໂຮງຮຽນໃນທົ່ວປະເທດ, ສ້າງ ແລະ ປັບປຸງຫລັກສູດການຮຽນ ແລະໂຄງການສິດສອນ. ຍາດແຍ່ງ ແລະນຳໃຊ້ການຊ່ວຍເຫລືອກູ້ຢືມຈາກສາກົນເຂົ້າໃນວຽກງານນີ້ຢ່າງມີປະສິດທິຜົນ ໂດຍສົມທົບກັບທຶນຮອນພາຍໃນປະເທດແລະການປະກອບສ່ວນຂອງປະຊາຊົນຊັ້ນຄົນຕ່າງໆ ເພື່ອປຸກສ້າງ, ສ້ອມແປງໂຮງຮຽນ, ໂຮງໝໍ, ສະຖານທີ່ວັດທະນະທຳ, ແກ້ໄຂຊີວິດການເປັນຢູ່ຂອງຄູອາຈານ, ພະນັກງານແພດໝໍ, ເຊີດຊູກຽດສັກສີຂອງເຂົາເຈົ້າຂຶ້ນ.

- ອົງການສະຫວັດດີການ-ສັງຄົມ, ອຳນາດການປົກຄອງແຕ່ລະຂັ້ນ, ອົງການຈັດຕັ້ງມະຫາຊົນ ແຕ່ລະບ່ອນ ຕ້ອງຈັດຕັ້ງຊ່ວຍ

ເຫລືອ, ເບິ່ງແຍງໃນຕົວຈິງຕໍ່ຜູ້ເສຍອົງຄະ, ຄອບຄົວຜູ້ທີ່ໄດ້ເສຍສະຫລະຊີວິດເພື່ອຊາດ, ຜູ້ທີ່ອອກກິນເບ້ຍບຳນານ, ຄອບຄົວຜູ້ທີ່ມີຄຸນງາມຄວາມດີຕໍ່ການປະຕິວັດ.

- ຂະແໜງໂຄສະນາ, ຖະແຫລງຂ່າວ ແລະໜັງສືພິມ ຕ້ອງຍົກສູງພາລະບົດບາດເປັນເຄື່ອງມືອັນຄົມແຫລມຂອງພັກ ແລະລັດ, ຕ້ອງຕອບໂຕ້ຢ່າງທັນການ ການໂຄສະນາທັບຖົມພັກ ແລະການນຳ, ບິດເບືອນຄວາມເປັນຈິງ ແລະໃສ່ຮ້າຍປ້າຍສີລະບອບໃໝ່.

໔)- <u>ກ່ຽວກັບການປ້ອງກັນຊາດ - ປ້ອງກັນຄວາມສະຫງົບ</u>.

ພວກເຮົາຕ້ອງຮັບຮູ້ແຈ້ງວ່າ ພວກຈັກກະພັດປະຕິການແລະອິດທິກຳລັງປໍລະປັກພວມອອກແຮງເຄື່ອນໄຫວຢ່າງຕັ້ງໜ້າກວ່າ ເກົ່າເພື່ອປະຕິບັດການຫັນປ່ຽນໂດຍສັນຕິ ແລະກະກຽມການກະບົດໂຄ່ນລົ້ມລະບອບໃໝ່ຂອງພວກເຮົາ. ດັ່ງນັ້ນ ຍິ່ງກວ່າເວລາໃດໝົດ ທົ່ວພັກ, ທົ່ວກອງທັບ, ທົ່ວປວງຊົນຕ້ອງຍົກສູງສະຕິລະວັງຕົວຢູ່ສະເໝີ. ບໍ່ຫວາດຫວັ່ນຄອນແຄນ ແຕ່ກໍ່ບໍ່ອັດຕະວິໄສ. ຕ້ອງເຫັນແຈ້ງອຸບາຍ, ເລ່ຫລ່ຽມຂອງສັດຕູແລະເປັນເຈົ້າການທັບມ້າງຢ່າງທັນການ, ດັບມອດທຸກຄວາມພະຍາຍາມກໍ່ການກະບົດໂຄ່ນລົ້ມລະບອບໃໝ່ ຂອງພວກເຮົາ.

ປຸກລະດົມຂະບວນການມະຫາຊົນເຂົ້າຮ່ວມໃນການປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພຂອງສັງຄົມ, ແລະ

ຄວາມສະຫງົບສຸກຢູ່ກັບທີ່, ກ່ອນອື່ນ ເນັ້ນໃນຕົວເມືອງຕ່າງໆ. ປັບປຸງແລະກໍ່ສ້າງກຳລັງປະກອບອາວຸດ ແລະ ກຳລັງປ້ອງກັນຄວາມສະຫງົບ ໄປພ້ອມໆ ກັບການແກ້ໄຂບັນຫາເສດຖະກິດ-ການຜະລິດ ແລະ ຊີວິດການເປັນຢູ່ຮາກຖານໃຫ້ໄດ້ເປັນຢ່າງດີ.

ນ)- ສືບຕໍ່ຫັນລົງຮາກຖານຢ່າງເລິກເຊິ່ງ, ທົ່ວເຖິງເປັນລະບົບຄົບຊຸດ, ປຸກລຸກຂະບວນການຂອງມະຫາຊົນ, ກໍ່ສ້າງແລະປັບປຸງລະບອບປະຊາທິປະໄຕປະຊາຊົນ ແຕ່ຮາກຖານຂຶ້ນມາໃຫ້ໜັກແໜ້ນເຂັ້ມແຂງ.

ຕໍ່ໜ້າສະພາບການໃໝ່ພາຍໃນປະເທດ ແລະສາກົນ ວຽກງານຫັນພະນັກງານ ແລະການຂົນກຳລັງໃຫ້ເຖິງຮາກຖານ ໄດ້ກາຍເປັນວຽກງານອັນຈຳເປັນ ແລະຮີບດ່ວນກວ່າເວລາໃດໝົດ. ໂດຍສືບຕໍ່ປະຕິບັດມະຕິ ໕໑ ຂອງກົມການເມືອງ, ໃນປີ ໑໙໙໐ ນີ້ພວກເຮົາຕ້ອງຜັນຂະຫຍາຍບົດຮຽນທີ່ຖອດຖອນໄດ້ ແລະເປີດກວ້າງວຽກງານການກໍ່ສ້າງຮາກຖານ, ປຸກລຸກຂະບວນການໄປສູ່ແຂວງຕ່າງໆ ໃນທົ່ວປະເທດຢ່າງແຂງແຮງ ແລະຄົບຊຸດກວ່າເກົ່າ.

ເອົາວຽກງານຫັນລົງຮາກຖານຕິດພັນກັບການຍູ້ເຮັ່ງການຜະລິດຕາມໂຄງປະກອບເສດຖະກິດໃໝ່ ໃນນັ້ນ ເນັ້ນຖືເອົາການຜະລິດກະສິກຳເປັນສະໜາມຮົບອັນດັບໜຶ່ງ; ເຊີດຊູ ແລະເສີມຂະຫຍາຍປະຊາທິປະໄຕໃນໝູ່ປະຊາຊົນ, ໃຫ້ປະຊາຊົນເຂົ້າຮ່ວມໃນການປຶກສາ

ຫລືວຽກງານຕ່າງໆ, ຕະຫລອດເຖິງໃນການສ້າງພັກ, ຟື້ນຟູອຳນາດການປົກຄອງຢູ່ທ້ອງຖິ່ນ ແລະຮາກຖານ. ໂດຍຜ່ານການ ຫັນລົງຮາກຖານ ພວກເຮົາຈະຟື້ນຟູ ແລະ ເພີ່ມທະວີກ້ອນກຳລັງພັນທະພາບ- ກຳມະກອນ-ຊາວນາ-ນັກຮຽນຮູ້ ປັນຍາຊົນໄດ້ໃນຕົວຈິງ. ຫັນລົງຮາກຖານ ຕ້ອງຖືປະຊາຊົນເປັນກົກ, ກຳໃຫ້ໄດ້ຄວາມຄິດ, ຈິດໃຈ, ຄວາມຂ້ອງໃຈ ແລະຄວາມມຸ່ງມາດປາຖະໜາຂອງປະຊາຊົນ, ຊ່ວຍເຫລືອເຂົາເຈົ້າແກ້ໄຂບັນຫາຕ່າງໆ.

- ບັນດາອົງການຈັດຕັ້ງມະຫາຊົນ ຕ້ອງຫັນທຸກການ ເຄື່ອນໄຫວຂອງຕົນ ລົງສູ່ຮາກຖານ, ຮີບຮ້ອນປ່ຽນແປງໃໝ່ເນື້ອໃນ ແລະແບບແຜນວິທີເຮັດວຽກຂອງຕົນໃຫ້ສອດຄ່ອງກັບການປ່ຽນແປງ ລວມ ແລະໃຫ້ສົມຄູ່ກັບ ໜ້າທີ່ໃໝ່ຂອງການປະຕິວັດໃນໄລຍະໃໝ່.

- ເອົາໃຈໃສ່ຟື້ນຟູວຽກງານແນວໂຮມ ແລະວຽກງານເຜົ່າຊົນ. ອົງການແນວໂຮມ ແລະເຜົ່າຊົນ ຕ້ອງປຸກລະດົມຂົນຂວາຍ, ດູດດຶງ, ຈັດຕັ້ງພະນັກງານປະຕິວັດອາວຸໂສ, ຜູ້ອອກກິນເບ້ຍບຳນານ, ພະສົງສາມະເນນ, ເຈົ້າກົກເຈົ້າເຫລົ່າ, ນັກຮຽນຮູ້ປັນຍາຊົນ, ຜູ້ຊົງຄຸນວຸດທິ... ເຂົ້າຮ່ວມໃນການເປິກສາຫາລືວຽກງານ ຕ່າງໆ, ຊຸກຍູ້ລູກຫລານ, ປຸ້ມລຸມສາມັກຄີກັນສ້າງບ້ານແປງເມືອງ, ປຸກລະດົມຊາວໜຸ່ມປະຕິບັດພັນທະຮັບໃຊ້ປະເທດຊາດ.

## ໔/- ເພີ່ມທະວີວຽກງານສ້າງລະບົບກົດໝາຍ ແລະ ສຶກສາ

ອົບຮົມສະຕິດ້ານກົດໝາຍ. ໃນກອງປະຊຸມຄັ້ງປະຖົມມະລຶກຂອງ ສະພາປະຊາຊົນສູງສຸດ, ຂ້າພະເຈົ້າໄດ້ເນັ້ນເຖິງວ່າ ໜ້າທີ່ອັນຕົ້ນຕໍຂອງສະພາປະຊາຊົນສູງສຸດຊຸດນີ້ ແມ່ນສ້າງລັດຖະທຳມະນູນ ແລະລະບົບກົດໝາຍແຫ່ງລັດ. ໂດຍເຫັນແຈ້ງຕໍ່ຄວາມຮັບຜິດຊອບແລະໜ້າທີ່ອັນໜັກໜ່ວງຂອງຕົນ, ສະພາປະຊາຊົນສູງສຸດກໍໄດ້ອອກແຮງຮ່ວມກັບຂະແໜງການທີ່ກ່ຽວຂ້ອງກະກຽມສ້າງຮ່າງລັດຖະທຳມະນູນ ຢ່າງຕັ້ງໜ້າ ແລະໄດ້ຮັບຮອງເອົາກົດໝາຍຈຳນວນໜຶ່ງ. ນັ້ນ ແມ່ນຜົນງານທີ່ໜ້າຊື່ນຊົມ ແລະສັນລະເສີນ. ເຖິງຢ່າງໃດກໍດີ ສະພາປະຊາຊົນ ສູງສຸດຍັງຕ້ອງເຫັນແຈ້ງວ່າ ໜ້າທີ່ອັນຕົ້ນຕໍສຳລັບປີ ໑໙໙໐ ນີ້ກໍຍັງແມ່ນການສ້າງຮ່າງລັດຖະທຳມະນູນ. ນອກນັ້ນ ກໍຍັງຕ້ອງສົມທົບ ແລະຊ່ວຍຂະແໜງການທີ່ກ່ຽວຂ້ອງຄົ້ນຄວ້າສ້າງກົດໝາຍເສດຖະກິດ- ສັງຄົມທີ່ຈຳເປັນຈຳນວນໜຶ່ງ ເພື່ອນຳສະເໜີຜ່ານວາລະປະຊຸມຄັ້ງຕໍ່ໄປຂອງສະພາປະຊາຊົນສູງສຸດ ເພື່ອຮັບຮອງເອົາ, ສຶກສາອົບຮົມ ພົນລະເມືອງທຸກຄົນໃຫ້ມີສະຕິລະບຽບກົດໝາຍ, ເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ.

໕)- ວຽກງານການຕ່າງປະເທດ, ໃນເງື່ອນໄຂທີ່ສະພາບການສາກົນພວມຜັນແປໄປຢ່າງເລິກເຊິ່ງ, ສັບສົນແລະໄວວານີ້ ພັກແລະລັດເຮົາຍັງຕ້ອງຢຶດໝັ້ນໃນແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະຮ່ວມມືອັນສະເໝີຕົ້ນສະເໝີປາຍ

ຂອງຕົນ, ສ້າງສາຍພົວພັນອັນດີງາມກັບປະເທດເພື່ອນບ້ານໃກ້ຄຽງ ແລະກັບທຸກໆ ປະເທດໃນໂລກ ໂດຍບໍ່ຈຳແນກລະບອບການເມືອງ-ສັງຄົມແຕກຕ່າງກັນ ບົນພື້ນຖານ ໕ ຫລັກການແຫ່ງການຢູ່ຮ່ວມກັນໂດຍສັນຕິ. ພວກເຮົາຈະເພີ່ມທະວີສາຍພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານແບບຕ່າງຝ່າຍຕ່າງ ມີຜົນກັບຫວຽດນາມ ແລະກຳປູເຈຍ, ສືບຕໍ່ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການແກ້ໄຂບັນຫາກຳປູເຈຍຢ່າງຖືກຕ້ອງ ແລະຍຸດຕິທຳ, ສອດຄ່ອງກັບສະພາບການຕົວຈິງຢູ່ກຳປູເຈຍໃນປະຈຸບັນ, ສ້າງອາຊີ ອາຄະເນໃຫ້ກາຍເປັນພາກພື້ນແຫ່ງສັນຕິພາບ, ສະຖຽນລະພາບ, ມິດຕະພາບ ແລະການຮ່ວມມື. ພວກເຮົາຈະເພີ່ມທະວີສາຍພົວພັນມິດຕະພາບ ແລະການຮ່ວມມືຮອບດ້ານກັບສະຫະພາບໂຊວຽດ, ພົວພັນແລະຮ່ວມມືກັບ ສ.ປ.ຈີນ, ກັບບັນດາປະເທດອ້າຍນ້ອງແລະເພື່ອນມິດໃນທົ່ວໂລກ.

ພວກເຮົາຈະສືບຕໍ່ເປີດກວ້າງການພົວພັນເສດຖະກິດກັບຕ່າງປະເທດ, ຖືອັນນີ້ ເປັນນະໂຍບາຍຍາວນານ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ. ຕ້ອງຮີບຮ້ອນປ່ຽນແປງໃໝ່ໃນກົນໄກພົວພັນເສດຖະກິດກັບຕ່າງປະເທດ ເພີ່ມທະວີການຄຸ້ມຄອງວຽກງານດັ່ງກ່າວດ້ວຍລະບຽບກົດໝາຍ, ດ້ວຍນະໂຍບາຍຕ່າງໆ ຢ່າງເປັນເອກະພາບ. ຕ້ອງປະກາດໃຊ້ຂໍ້ກຳນົດ,

ນະໂຍບາຍລະອຽດຈຳນວນໜຶ່ງ ເພື່ອດູດດຶງ ແລະສ້າງເງື່ອນໄຂສະດວກແກ່ຜູ້ມາລົງທຶນ ແລະນັກທຸລະກິດຊາວຕ່າງປະເທດ. ຕ້ອງບຳລຸງສ້າງ ແລະເຝິກອົບຮົມພະນັກງານ, ນຳໃຊ້ ແລະສັບຊ້ອນ ຜູ້ທີ່ມີຄວາມສາມາດ, ມີບົດຮຽນໃນດ້ານນີ້ເຂົ້າໃນວຽກງານດັ່ງກ່າວ.

ຜ)- <u>ເພີ່ມທະວີວຽກງານແນວຄິດແລະວຽກງານພະນັກງານ</u>.

ເພື່ອສືບຕໍ່ນຳເອົາການປ່ຽນແປງໃໝ່ກ້າວຂຶ້ນ, ປົກປັກຮັກສາ ແລະເສີມຂະຫຍາຍໝາກຜົນຂອງການປະຕິວັດໃນໄລຍະໃໝ່ບັນຫາຕັດສິນສຸດທ້າຍແມ່ນຄົນ, ແມ່ນພະນັກງານສະມາຊິກຂອງພວກເຮົາ ນັ້ນເອງ. ດັ່ງນັ້ນ ພວກເຮົາຕ້ອງເອົາໃຈໃສ່ເປັນພິເສດຕໍ່ບັນຫາສ້າງຄົນ, ສຶກສາອົບຮົມນ້ຳໃຈຮັກຊາດ, ຮັກລະບອບໃໝ່, ມີຄວາມເຊື່ອໝັ້ນຕໍ່ອຸດົມການປະຕິວັດ, ຕໍ່ການນຳພາຂອງພັກ, ມີນ້ຳໃຈ ສາມັກຄີປອງດອງ, ມີຄວາມທະນົງໃຈຕໍ່ຊາດ, ຕໍ່ມູນເຊື້ອປະຕິວັດ ອັນສະຫງ່າງົດງາມຂອງພັກ ແລະຂອງປະຊາຊົນເຮົາ.

ສຶກສາອົບຮົມກ່ຽວກັບມູນເຊື້ອດຸໝັ່ນອອກແຮງງານປະດິດສ້າງ, ສະແຫວງຫາຄວາມກ້າວໜ້າ, ມີແບບແຜນດຳລົງຊີວິດປອດໃສ, ຊື່ສັດສຸດຈະລິດ, ຮູ້ຖະໜຸຖະໜອມຮີດຄອງປະເພນີອັນດີງາມຂອງຊາດ, ມີສະຕິນັບຖືລະບຽບກົດໝາຍ, ມີນ້ຳໃຈສາກົນ, ນຳໜ້າເປັນແບບຢ່າງ, ມີຄວາມຮັບຜິດຊອບລະບຽບວິໄນ, ມີຄວາມສາມັກຄີເປັນເອກະພາບ.

ຕ້ານແນວຄິດນະລູມນະລວຍ, ຂາດຫລັກໝັ້ນຊຸ່ນຊ່ວນ, ຕ້ານ

ແນວຄິດເສລີ, ປະຊາທິປະໄຕເກີນຂອບເຂດ, ຕ້ານການ ຣັກສາເດີມ, ອັດຕະວິໄສ, ຕ້ານແບບແຜນອາດຍາສິດ, ສໍ້ລາດບັງຫລວງ, ເຫັນແກ່ກຸ່ມເຈື້ອ, ເຊື້ອສາຍ, ພາກສ່ວນ, ເອກະຊົນ ຄັບແຄບ, ເຈົ້າໂຄດ, ລໍຄອຍເອື້ອຍອີງ...

- ເຊີດຊູ, ເສີມຂະຫຍາຍປະຊາທິປະໄຕ. ຂະບວນ ວິວັດແຫ່ງການປ່ຽນແປງໃໝ່ຂອງພວກເຮົາ ເປັນຂະບວນວິວັດ ແຫ່ງການເຊີດຊູເສີມຂະຫຍາຍປະຊາທິປະໄຕ. ສຳລັບພວກເຮົາແລ້ວ ປະຊາທິປະໄຕທັງເປັນຈຸດປະສົງ, ທັງເປັນກຳລັງດັນ. ປະຊາທິປະໄຕຂອງພວກເຮົາເປັນປະຊາທິປະໄຕ ເພື່ອປະຊາຊົນ, ຂອງປະຊາຊົນ ແລະດ້ວຍປະຊາຊົນ. ອັນນີ້ ເປັນປະຊາທິປະໄຕທີ່ແທ້ຈິງ.ປະຊາທິປະໄຕ ຕ້ອງໄດ້ຮັບການເຊີດຊູ ແລະເສີມຂະຫຍາຍໂດຍຂຶ້ນກັບລະດັບວັດທະນະທຳ, ເງື່ອນໄຂ ແລະຈຸດພິເສດທາງດ້ານ ເສດຖະກິດ-ສັງຄົມຂອງປະເທດ.

ປະຊາທິປະໄຕຂອງພວກເຮົາເປັນລະບອບລວມສູນປະຊາ ທິປະໄຕ. ໝາຍຄວາມວ່າ ລວມສູນຢູ່ບົນພື້ນຖານປະຊາທິປະໄຕ, ແລະປະຊາທິປະໄຕຢູ່ໃຕ້ການຊີ້ນຳຂອງລວມສູນ, ລວມສູນແຕ່ບໍ່ມີປະຊາທິປະໄຕ ຈະກາຍເປັນລວມສູນອາດຍາສິດ; ກົງກັນຂ້າມ ຖ້າມີປະຊາທິປະໄຕ ບໍ່ຢູ່ໃຕ້ການຊີ້ນຳຂອງລວມສູນກໍຈະກາຍເປັນປະຊາທິປະໄຕເກີນຂອບເຂດ, ມ້າງເພຄວາມເປັນເອກະພາບພາຍໃນ.

- ມີແຕ່ປະຕິບັດລະບອບລວມສູນປະຊາທິປະໄຕ ຈຶ່ງຈະ ຮັບປະກັນຄວາມສາມັກຄີເປັນເອກະພາບທາງດ້ານມານະຈິດ, ຄວາມເປັນເອກະພາບທາງດ້ານການກະທຳ, ຈຶ່ງຈະປົກປັກຮັກສາກຳລັງແຮງຂອງການຈັດຕັ້ງ ແລະແນວທາງນະໂຍບາຍຂອງພັກ ແລະ ຈຶ່ງຈະຮັບປະກັນການນຳພາຂອງພັກໄດ້. ຢ່າງໃດກໍດີ, ສິ່ງດັ່ງກ່າວນັ້ນ ບໍ່ໄດ້ໝາຍເຖິງວ່າ ທາງສູນກາງ ເຮັດແນວໃດທ້ອງຖິ່ນຮາກຖານຕ້ອງປະຕິບັດຕາມ, ຈົດກາຍລອກແບບຕາຍຕົວແຂງກະດ້າງຫລືເຮັດເປັນຕົວແບບອັນດຽວ ແຕ່ເທິງລົງຮອດລຸ່ມນັ້ນແຕ່ຢ່າງໃດ. ພັກຮຽກຮ້ອງໃຫ້ເອກະພາບຕໍ່ບັນດາບັນຫາພື້ນຖານ, ຕົ້ນຕໍ, ສ່ວນໃນເວລາຈັດຕັ້ງປະຕິບັດກໍຕ້ອງມີໄຫວພິບ, ປະດິດສ້າງໂດຍສອດຄ່ອງກັບເງື່ອນໄຂຢູ່ຮາກຖານ, ທ້ອງຖິ່ນຂອງຕົນ.

- ຢາກເຊີດຊູ ເສີມຂະຫຍາຍປະຊາທິປະໄຕ ກໍຕ້ອງ ເສີມຂະຫຍາຍບົດບາດເປັນເຈົ້າຂອງປະຊາຊົນ, ປຸກລະດົມກຳລັງ ປະດິດສ້າງຂອງປະຊາຊົນໃນການປະຕິບັດແນວທາງນະໂຍບາຍຂອງພັກ.

- ປະຊາທິປະໄຕ ຕ້ອງຢູ່ໃນຂອບເຂດຂອງກົດໝາຍ, ບໍ່ແມ່ນວ່າປະຊາທິປະໄຕແບບເກີນຂອບເຂດ ຫລືອະນາທິປະໄຕ. ປະຊາທິປະໄຕ ຕ້ອງຢູ່ໃຕ້ການນຳພາຂອງພັກ.

- ສືບຕໍ່ປຸງລະບົບກົງຈັກການຈັດຕັ້ງຂັ້ນຕ່າງໆ ແລະ ເພີ່ມທະວີອົງການພະນັກງານ. ໃນໄລຍະຜ່ານມາ ສາຍເຫດອັນໜຶ່ງທີ່ພາ

ໃຫ້ການປະຕິວັດວຽກງານຂອງພວກເຮົາຂາດປະສິດທິຜົນ ຫລືມີ ປະສິດທິຜົນຕ່ຳນັ້ນ ເພາະຍ້ອນບູລະນະການຈັດຕັ້ງ, ສັບຊ້ອນກົງຈັກ ຄົນໃໝ່ ບໍ່ທັນແລວຢ່າງຄັກແນ່ນເທື່ອ. ພວກເຮົາຕ້ອງສືບຕໍ່ບູລະນະກົງຈັກການຈັດຕັ້ງ, ສັບຊ້ອນຈັດວາງພະນັກງານໃຫ້ສຳເລັດ ແລະ ມີຄວາມສະຫງົບປົກກະຕິໂດຍໄວ. ຕ້ອງເລັ່ງລັດສ້າງກົດລະບຽບຂອງກະຊວງ ແລະຂະແໜງການຕ່າງໆ ຢູ່ຂັ້ນສູນກາງ, ກຳນົດ ລະບຽບການປະສານສົມທົບ, ອຳນວຍຄວບຄຸມວຽກງານດ້ານການ ປົກຄອງແລະການຄຸ້ມຄອງຕາມສາຍຕັ້ງ ແລະສາຍຂວາງ, ສ້າງກົດລະບຽບການຈັດຕັ້ງ ແລະການເຄື່ອນໄຫວຂອງອົງການຂັ້ນຕ່າງໆ, ເມືອງ ແລະຮາກຖານການຜະລິດທຸລະກິດ ເພື່ອໃຫ້ທ້ອງຖິ່ນມີບ່ອນອີງ ໃນການຈັດຕັ້ງປະຕິບັດ.

ຕ້ອງນຳໃຊ້ພະນັກງານປະເພດຕ່າງໆ ໃຫ້ດີ ນັບທັງ ພະນັກງານເກົ່າ ແລະໃໝ່, ພະນັກງານອາວຸໂສ ແລະໜຸ່ມນ້ອຍ ແນໃສ່ສ້າງກອງກຳລັງສາມັກຄີ ແລະເສີມຂະຫຍາຍຄຸນປະໂຫຍດດ້ານບົດຮຽນ, ສະຕິປັນຍາ ແລະຄວາມສາມາດຢ່າງແທ້ຈິງ, ເຮັດສຳເລັດໜ້າທີ່ຂອງການປະຕິວັດໃນໄລຍະໃໝ່.

ເພີ່ມທະວີວຽກງານຄຸ້ມຄອງພະນັກງານທາງດ້ານການເມືອງ ແນວຄິດ ແລະວິຊາການເປັນຢ່າງດີ, ອອກຂໍ້ກຳນົດກ່ຽວກັບ ພະນັກງານ, ສະກັດກັ້ນ ແລະກຳຈັດປະກົດການຫຍໍ້ທໍ້ເກີດຂຶ້ນ ແລະ ແຜ່

ຂະຫຍາຍໃນຖັນແຖວພະນັກງານ. ປະຕິບັດລະບອບເງິນເດືອນໃໝ່ເປັນຢ່າງດີ, ພ້ອມກັນນັ້ນ ກໍ່ຄົ້ນຄວ້າມາດຕະການຊ່ວຍເຫຼືອພະນັກງານໃນການເຮັດເສດຖະກິດຄອບຄົວ ເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າເປັນປົກກະຕິ. ຄົ້ນຄວ້າວາງນະໂຍບາຍຈຳນວນໜຶ່ງຕໍ່ພະນັກງານ (ໄປຮ່ຳຮຽນ ຫຼືເຝິກອົບຮົມ, ເລື່ອນຊັ້ນຕ່ຳແໜ່ງ, ຍ້ອງຍໍ, ພັກຜ່ອນ, ປິ່ນປົວພະຍາດ...) ແລະເບິ່ງແຍງຊ່ວຍເຫຼືອຜູ້ອອກກິນເບ້ຍບຳນານໃຫ້ດີ.

ບັນດາທ່ານຜູ້ແທນ,

ທີ່ກ່າວມາເທິງນັ້ນ ແມ່ນຄວາມຄິດຄວາມເຫັນຂອງ ຂ້າພະເຈົ້າກ່ຽວກັບບາງບັນຫາ ທີ່ມີລັກສະນະສົດໆ ຮ້ອນໆ ເຊິ່ງ ກອງປະຊຸມຄົບຄະນະຄັ້ງທີ ໗ (ສະໄໝທີ ///) ຂອງສູນກາງພັກໄດ້ຄົ້ນຄວ້າ ແລະຕົກລົງເປັນມະຕິໃນທີ່ໃໝ່ຜ່ານມານີ້. ຂ້າພະເຈົ້າສະເໜີໃຫ້ບັນດາທ່ານຜູ້ແທນສະພາປະຊາຊົນສູງສຸດ ຄົ້ນຄວ້າ ອະພິປາຍຢ່າງຖີ່ຖ້ວນ ເພື່ອເປັນທິດທາງໃນການເຄື່ອນໄຫວຂອງຕົນ.

ປີ ໑໙໙໐ ແມ່ນປີສຸດທ້າຍຂອງແຜນການ ໕ ປີແຫ່ງລັດຄັ້ງທີສອງ ແລະແມ່ນປີກະກຽມໃຫ້ແກ່ແຜນການ ໕ ປີແຫ່ງລັດຄັ້ງທີສາມ. ທົ່ວພັກ, ທົ່ວກອງທັບ ແລະທົ່ວປວງຊົນເຮົາ ພວມອອກແຮງແຂ່ງຂັນກັນສ້າງຜົນງານໃນທຸກດ້ານ ເພື່ອຂ່ຳນັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງ

ທີ່ V ຂອງພັກປະຊາຊົນປະຕິວັດລາວ ແລະສະເຫລີມສະຫລອງ ໔ ວັນບຸນໃຫຍ່ ເຊັ່ນ: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ ໓໕ ປີ, ວັນສ້າງຕັ້ງສາທາລະນະລັດປະຊາທິປະໄຕປະຊາຊົນ ລາວ ຄົບຮອບ ໑໕ ປີ, ວັນເກີດຂອງປະທານ ໂຮ່ຈິມິນ ທີ່ເຄົາລົບຮັກຄົບຮອບ ໑໐໐ ປີ ແລະວັນເກີດຂອງ ວ.ອ ເລນິນຜູ້ຍິ່ງໃຫຍ່ ຄົບຮອບ ໑໒໐ ປີ. ສະພາບການຢູ່ພາຍໃນປະເທດພວມມີການຫັນປ່ຽນ ດ້ວຍດວງທາງອັນດີ, ແຕ່ ສະພາບການຂອງໂລກ ຊ້ຳພັດພວມຜັນແປຢ່າງສັບສົນທີ່ສຸດ.

ເວລານີ້ ຍິ່ງກວ່າເວລາໃດໝົດ ທີ່ພວກເຮົາຕ້ອງ ເພີ່ມທະວີຄວາມສາມັກຄີເປັນເອກະພາບໃນທົ່ວພັກ, ປະຕິບັດຄວາມສາມັກຄີປອງດອງລະຫວ່າງປະຊາຊົນເຜົ່າຕ່າງໆ, ຢຶດໝັ້ນໃນລັດທິ ມາກ - ເລນິນ, ຢຶດໝັ້ນໃນຈຸດໝາຍສັງຄົມນິຍົມ, ຍົກສູງນ້ຳໃຈເພິ່ງຕົນເອງ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເສີມຂະຫຍາຍຄວາມ ອາດສາມາດສະຕິປັນຍາ ແລະຈິດໃຈເປັນເຈົ້າຂອງປະຊາຊົນທຸກຄົນຢ່າງສຸດຂີດ, ຊຸກຍູ້ການຜະລິດຢ່າງແຂງແຮງ, ປັບປຸງຊີວິດການເປັນຢູ່ທາງດ້ານວັດຖຸ ແລະຈິດໃຈຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ ເທື່ອລະກ້າວ ແລະເຊີດຊູສະຕິລະວັງຕົວປົກປັກຮັກສາເອກະລາດ, ອະທິປະໄຕຂອງຊາດ ແລະລະບອບໃໝ່ໄວ້ໃຫ້ໝັ້ນຄົງ.

ຕາງໜ້າຄະນະບໍລິຫານງານສູນກາງພັກ ແລະສະພາ ລັດຖະ

ນິມິຕ ຂ້າພະເຈົ້າ ຂໍອວຍພອນໃຫ້ກອງປະຊຸມສະພາປະຊາຊົນສູງສຸດສໍາເລັດຜົນຢ່າງຈົບງາມ, ອວຍພອນໃຫ້ບັນດາທ່ານຜູ້ແທນທຸກຄົນຈົ່ງມີສຸຂະພາບ ເຂັ້ມແຂງ ແລະສໍາເລັດໜ້າທີ່ອັນສໍາຄັນທີ່ຊາດ ແລະ ປະຊາຊົນມອບໝາຍໃຫ້ຢ່າງສະຫງ່າງາມ.

<u>ຂໍ ຂອບ ໃຈ</u> !

ພິມທີ່ວິສາຫະກິດການພິມຈຳໜ່າຍສຶກສາ